ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ຕຸລາ 2022
ປີທີ 11
ສະບັບທີ 882

## ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ

(ສພຊ) ໂດຍປະຕິບັດຕາມແຜນດຳເນີນງານຮ່ວມກັນ ລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ ແລະ ເພື່ອປະຕິບັດກົນໄກການປະສານງານ ແລະ ການປຶກສາຫາລືຮ່ວມ ລະຫວ່າງ ສະພາແຫ່ງຊາດ ແລະ ລັດຖະບານ ທີ່ດຳເນີນມາເປັນປົກກະຕິ. ໃນວັນທີ 11 ຕຸລາ 2022 ທີ່ຫໍປະຊຸມແຫ່ງຊາດ ໄດ້ຈັດກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ ໂດຍການເປັນປະທານຮ່ວມຂອງທ່ານ ໄຊສົມພອນ ພົມວິຫານ ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ຮອງນາຍົກ



ລັດຖະມົນຕີ, ປະທານ-ຮອງປະທານກຳມາທິການສະພາແຫ່ງຊາດ, ສະມາຊິກລັດຖະບານ ແລະ ຜູ້ຕາງໜ້າຈາກບັນດາກະຊວງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມ ແມ່ນປຶກສາຫາລື ແລະ ແລກປ່ຽນຄຳເຫັນ ເພື່ອກ້າວໄປເຖິງການສ້າງຄວາມເປັນເອກະພາບກັນຕໍ່ບັນດາເນື້ອໃນ ແລະ ໃນຂອບເຂດຄວາມຮັບຜິດຊອບຂອງລັດຖະບານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະຈັດຂຶ້ນໃນຕໍ່ໜ້າ; ເປັນເອກະພາບທາງດ້ານທັດສະນະຕໍ່ບັນຫາສຳຄັນຈຳນວນໜຶ່ງ ແລະ ພ້ອມກັນຕີລາຄາ, ຖອດຖອນບົດຮຽນ ກ່ຽວກັບກົນໄກການປະສານງານ ລະຫວ່າງ ລັດຖະບານ ກັບສະພາແຫ່ງຊາດ.

ສຳລັບເນື້ອໃນທີ່ນຳມາປຶກສາຫາລືໃນກອງປະຊຸມເທື່ອນີ້ ບັນດາຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ພ້ອມກັນສຸມໃສ່ປຶກສາຫາລື, ຄົ້ນຄວ້າ ແລະ ເປັນເອກະພາບ ຕໍ່ບັນຫາທີ່ສຳຄັນ ຄື:

1. ຜ່ານບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບ

ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ໃຫ້ສຳພາດ ເນື່ອງໃນວັນສ້າງຕັ້ງສາຍພົວພັນການທູດ ລາວ-ຣັດເຊຍ



ໜ້າ 3

## ຖອດຖອນບົດຮຽນການເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນ

(ສພຊ) ວັນທີ 23 ກັນຍາ ຜ່ານມານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ເປີດກອງປະຊຸມສະຫລຸບຖອດຖອນບົດຮຽນການລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງວຽງຈັນ ຊຸດທີ

ອ່ານຕໍ່ໜ້າ 3



## ທາບທາມຄຳເຫັນຂອງ ສສຊ ແລະ ສສຂ 4 ແຂວງພາກໃຕ້ ໃສ່ຮ່າງກົດໝາຍ 12 ສະບັບ

(ສພຊ) ວັນທີ 3-7 ຕຸລາ 2022 ທີ່ສະໂມສອນຂອງແຂວງຈຳປາສັກ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 12 ສະບັບ ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ມີບັນດາທ່ານປະທານ-ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຈາກ 4 ແຂວງພາກໃຕ້ ຄື: ຈຳປາສັກ, ເຊກອງ, ສາລະວັນ ແລະ ອັດຕະປື ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມ, ທ່ານ ຄຳໃບ ດຳລັດ ໄດ້ກ່າວຈຸດປະສົງຂອງການດຳເນີນກອງປະຊຸມວ່າ:

ອ່ານຕໍ່ໜ້າ 2

## ສສຊ ແລະ ສສຂ ພົບປະໂອ້ລົມ ຜູ້ມີສິດເລືອກຕັ້ງ ຢູ່ບ້ານໂຮງຊາຍທອງ




ໜ້າ 2

## ຕິດຕາມກວດກາ ແລະ ເກັບກຳ ສະພາບການວ່າງງານຂອງແຮງງານລາວ

(ສພຊ) ວັນທີ 26 ກັນຍາ ຜ່ານມານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ສຳເລັດກອງປະຊຸມຕິດຕາມກວດກາ ກ່ຽວກັບການສ້າງອາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ແລະ ກ່ຽວກັບການ

ອ່ານຕໍ່ໜ້າ 3



## ສະຫລຸບຖອດຖອນບົດຮຽນງານແຂ່ງຂັນລົດຖີບ ປີສາມັກຄີມິດຕະພາບລາວ-ຫວຽດນາມ

(ສພຊ) ກອງປະຊຸມສະຫລຸບຖອດຖອນບົດຮຽນການຮັບໃຊ້ງານແຂ່ງຂັນລົດຖີບ ປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ໄດ້ຈັດຂຶ້ນໃນວັນທີ 7 ຕຸລາຜ່ານມາ, ໂດຍການເປັນປະທານຂອງທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫລືອສັງຄົມ ຂອງສະພາແຫ່ງຊາດ, ມີທ່ານ ສົມຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ບັນດາທ່ານຮອງປະທານ, ກຳມະການ, ຜູ້

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍວັນປະກາດເອກະລາດ (12 ຕຸລາ 1945-12 ຕຸລາ 2022) ຄົບຮອບ 77 ປີ ຢ່າງສຸດໃຈ!



## ກອງປະຊຸມ...

ປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 9 ເດືອນ, ຄາດຄະເນ 3 ເດືອນທ້າຍປີ 2022 ແລະ ທິດທາງແຜນການປີ 2023.

2. ລາຍງານໂດຍລວມ ກ່ຽວກັບຄວາມຄືບໜ້າການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດບ້ວງປົກກະຕິ ແລະ ການອວ່າຍໜີ້ 3 ແຈ ໂດຍສະເພາະບັນດາໂຄງການທີ່ຄະນະປະຈໍາສະພາແຫ່ງຊາດ ໄດ້ມີມະຕິ ແລະ ສະເໜີໃຫ້ລັດຖະບານ ຈັດຕັ້ງປະຕິບັດ;

3. ລາຍງານກ່ຽວກັບນະໂຍບາຍ ແລະ ມາດຕະການສະໜອງເງິນຕາ ເພື່ອຮັບປະກັນການນໍາເຂົ້ານໍ້າມັນເຊື້ອໄຟ ສໍາລັບໄລຍະກາງ ແລະ ໄລຍະຍາວ; ມາດຕະການແກ້ໄຂເງິນເຟີ້ ສໍາລັບໄລຍະກາງ ແລະ ໄລຍະຍາວ;

4. ລາຍງານການຄຸ້ມຄອງລາຄາສິນຄ້າ ແລະ ການນໍາເຂົ້ານໍ້າມັນເຊື້ອໄຟ ໃນເງື່ອນໄຂສະພາບເສດຖະກິດ ມີຄວາມຫຍຸ້ງຍາກ;

5. ລາຍງານການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດ, ການອະນຸຍາດສໍາປະທານ ແລະ ການແບ່ງຂັ້ນຄຸ້ມຄອງ;

6. ລາຍງານສະພາບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງຫວຽດນາມ-ລາວ ຢູ່ ສປປລາວ.

7. ລາຍງານກ່ຽວກັບການພັດທະນາທ່າບົກ ຕາມທີ່ກໍານົດໄວ້ໃນຍຸດທະສາດໂລຊິດສະຕິກ ຂົນສົ່ງສິນຄ້າ ຢູ່ ສປປລາວ;

8. ແຜນການສ້າງກົດໝາຍ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025;

9. ປຶກສາຫາລືບັນດາຫົວຂໍ້ທີ່ຕິດພັນກັບຄວາມຮັບຜິດຊອບຂອງລັດຖະບານ ທີ່ຈະນໍາເຂົ້າພິຈາລະນາກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

10. ປຶກສາຫາລື ແລະ ຖອດຖອນບົດຮຽນວິທີການລາຍງານຂອງລັດຖະບານ, ການຕັ້ງຄໍາຊັກຖາມຂອງສະມາຊິກສະພາແຫ່ງຊາດແລະການຕອບຄໍາຊັກຖາມ ຂອງສະມາຊິກລັດຖະບານ ຕໍ່ກອງປະຊຸມສະພາແຫ່ງຊາດ.

ໃນໂອກາດນີ້, ປະທານກອງປະຊຸມ ໄດ້ກ່າວວ່າ: ເພື່ອເຮັດໃຫ້ກອງປະຊຸມ ສໍາເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ກໍານົດໄວ້ ຮຽກຮ້ອງມາຍັງບັນດາທ່ານລັດຖະມົນຕີ, ຜູ້ຕາງໜ້າຈາກກະຊວງ ທີ່ຮັບຜິດຊອບແຕ່ລະຫົວຂໍ້ນັ້ນ ລາຍງານຢ່າງກະທັດຮັດ ແລະ ສຸມໃສ່ສະເໜີບັນຫາທີ່ຂໍທິດຊີ້ນໍາ ຫລື ຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດເທົ່ານັ້ນ ລວມທັງການປະກອບຄໍາເຫັນຂອງບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ກໍໃຫ້ເຂົ້າບັນຫາທີ່ຍົກຂຶ້ນຢ່າງກົງໄປກົງມາ, ມີຈຸດສຸມ ແລະ ສະເໜີທິດທາງທີ່ຈະແຈ້ງ ເພື່ອໃຫ້ບັນດາກະຊວງກ່ຽວຂ້ອງ ກໍຄືລັດຖະບານ ໄດ້ນໍາໄປປັບປຸງບົດລາຍງານຕ່າງໆ ທີ່ຈະເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສົມບູນ ແລະ ຮັດກຸມ ຍິ່ງຂຶ້ນ.

## ເລື່ອງເດັ່ນ ຂ່າວເດັ່ນ

# ຄັດໂດຍ: ທອມສະນິດ

❑ *ເພື່ອເຮັດໃຫ້ສະພາບການສັນຈອນໃນງານບຸນຊ່ວງເຮືອທ່າວັດຈັນ ນະຄອນຫລວງວຽງຈັນ (ນວ) ມີຄວາມສະດວກສະບາຍ ຮັບປະກັນບໍ່ມີລົດຕິດອັ່ງອໍຫລາຍຊົ່ວໂມງພະແນກຕໍາຫລວດຈະລາຈອນ ນວ ໄດ້ສຸມກໍາລັງລົງປະຕິບັດໜ້າທີ່ ເລີ່ມແຕ່ວັນທີ 8-11 ຕຸລາ ຢູ່ຕາມຈຸດສັບສົນ 3 ແຍກ 4 ແຍກຕາມທາງສາຍຫລັກ ທີ່ມວນຊົນຈະເຂົ້າມາທ່ຽວຊົມພາຍໃນງານ ເພື່ອອໍານວຍຄວາມສະດວກຮອບດ້ານໃຫ້ແກ່ຜູ້ໃຊ້ລົດໃຊ້ຖະໜົນ ໂດຍຈະປະຈໍາຢູ່ 53 ຈຸດ ໃນນີ້, ວົງໃນ 31 ຈຸດ ວົງນອກ 22 ຈຸດ ລວມຈໍານວນພົນ 271 ທ່ານ.*

***ນສພ. ວຽງຈັນໃໝ່ 10/10/2022***

❑ *ເປີດບໍລິສັດ ບິດຄິກ (bitqik) ຈໍາກັດ ເພື່ອເປັນສູນຊື້-ຂາຍ ເງິນຄຣິບໂຕ ເບື້ອງຕົ້ນແມ່ນໄດ້ຮັບອະນຸຍາດເປັນສູນຊື້-ຂາຍເງິນຄຣິບໂຕ ສາມາດແລກປ່ຽນໄດ້ 20 ສະກຸນເງິນ (ຫລຽນ) ເປັນອີກຊ່ອງທາງໜຶ່ງເພື່ອຫລຸດຜ່ອນການຮົ່ວໄຫລຂອງເງິນຕາ ສໍາລັບສະກຸນເງິນທີ່ສາມາດແລກໄດ້ໃນປັດຈຸບັນປະກອບມີ: ບິດຄອຍ (BTC) ເອີເທີ (ETH), ສະເຕໂບຄອຍ (USDT) ໄປແນນສຄອຍ (BNB), ຄາດາໂນ (ADA), ຣິບໂປ (XRP), ໄບແນນສ໌ ຢູເອັສດີ (BUSD), ໂຊໂລນາ (SOL), ດອຈຄອຍ (DOGE), ໂພກາດອດ (DOT), ທຣອນ (TRX), ດາຍ (DAI), ອາວາແລັນ (AVAX), ຊິບະ (SHB), ໂພລີກອນ (MATIC), ໄລທຄອຍ (LTC), ເນຍໂປຣໂຕໂກ (NEAR), ຢູນິສະວາບ (UNI), ອີເທີລ້ຽມ ຄລາສຊິກ (ETC) ແລະ ບິດຄອຍແຄສ໌ (BCH).*

***ນສພ. ວຽງຈັນໃໝ່ 11/10/2022***

❑ *ສໍາລັບງານແຂ່ງຂັນຊ່ວງເຮືອໃນບຸນອອກພັນສາ ທີ່ທ່າວັດຈັນ ນະຄອນຫລວງວຽງຈັນ ມີເຮືອເຂົ້າຮ່ວມແຂ່ງຂັນໃນງານແຂ່ງຂັນຊ່ວງເຮືອກິລາ 12 ສີພາຍ ມີເຮືອເຂົ້າຮ່ວມທັງໝົດ 21 ລໍາ ແບ່ງອອກເປັນ 4 ກຸ່ມ ສ່ວນການແຂ່ງຂັນເຮືອປະເພນີ ຈໍານວນ 55 ສີພາຍ ຊາຍ-ຍິງ ປະເພດຊາຍ ມີ 7 ລໍາ ແບ່ງອອກເປັນ 2 ກຸ່ມ ແລະ ປະເພດຍິງ ມີ 5 ລໍາ ແບ່ງອອກເປັນ 2 ກຸ່ມ; ຜ່ານການແຂ່ງຂັນຊ່ວງເຮືອປະເພນີ ປະຈໍາປີ 2022 ແມ່ນຊະນະເລີດໄດ້ແກ່ເຮືອຣີສອດປາກນໍ້າຄານ ໄດ້ຮັບຂັນໝູນວຽນ.*

***ນສພ. ປະທດລາວ 12/10/2022***



## ທາບທາມ...

ເພື່ອທາບທາມຄໍາເຫັນຂອງບັນດາ ສສຊ, ສສຂ ຈາກ 4 ແຂວງພາກໃຕ້ ແລະ ພາກສ່ວນກ່ຽວຂ້ອງ ໃສ່ຮ່າງກົດໝາຍ ຈໍານວນ 12 ສະບັບ ໃຫ້ມີເນື້ອໃນຄົບຖ້ວນສົມບູນ ກ່ອນນໍາເຂົ້າຄົ້ນຄວ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ XI ທີ່ຈະດໍາເນີນໃນທ້າຍປີ 2022 ນີ້ ເຊິ່ງຮ່າງກົດໝາຍຈໍານວນ 12 ສະບັບ ທີ່ນໍາມາທາບທາມໃນກອງປະຊຸມຄັ້ງນີ້ປະກອບມີ: ກົດໝາຍສ້າງໃໝ່ 3 ສະບັບ, ກົດໝາຍ ສະບັບປັບປຸງ 9 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການທາງນໍ້າ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍຫໍພິພິທະຕະພັນ(ສ້າງໃໝ່), ກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັງປຸງ), ກົດໝາຍວ່າດ້ວຍທະບຽນສານ (ສ້າງໃໝ່), ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງ), ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັງປຸງ), ກົດໝາຍວ່າດ້ວຍທຸລະກໍາທາງເອເລັກໂຕຣນິກ (ສະບັບປັບປຸງ), ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ສະບັບປັບປຸງ), ກົດໝາຍວ່າດ້ວຍໄອຍະການທະຫານ (ສະບັບປັບປຸງ), ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ); ພ້ອມດຽວກັນນັ້ນ, ປະທານກອງປະຊຸມ ໄດ້ຮຽກຮ້ອງໃຫ້ບັນດາທ່ານຜູ້ແທນກອງປະຊຸມຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າປະກອບຄໍາເຫັນຢ່າງຕັ້ງໜ້າ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ສົມບູນ, ຮັດກຸມ ແລະ ສ່ອງແສງເຖິງແນວທາງຂອງພັກ, ມີລັກສະນະຊາດ, ລັກສະນະວິທະຍາສາດ, ລັກສະນະສາກົນໂດຍສອດຄ່ອງກັບສະພາບຄວາມເປັນຈິງ ຂອງສັງຄົມໃນປັດຈຸບັນ ແລະ ຍາວນານ.

ກອງປະຊຸມ ໄດ້ຮັບຟັງການນໍາສະເໜີໂດຍຫຍໍ້ກ່ຽວກັບເຫດຜົນ, ຄວາມຈໍາເປັນ ແລະ ເນື້ອໃນ ພ້ອມທັງຄໍາຖາມເຈາະຈີ້ມ ຕໍ່ການສ້າງ ແລະ ປັບປຸງກົດໝາຍ ແຕ່ລະສະບັບຈາກຄະນະຮັບຜິດຊອບ. ຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມ ໄດ້ພ້ອມກັນປະກອບຄໍາຄິດຄໍາເຫັນໃສ່ເນື້ອໃນຂອງຮ່າງກົດໝາຍທີ່ຄະນະຮັບຜິດຊອບນໍາສະເໜີຢ່າງມີຈຸດສຸມ, ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍທີ່ສ້າງຂຶ້ນໃໝ່ ແລະ ສະບັບປັບປຸງ ໃຫ້ມີເນື້ອໃນຄົບຖ້ວນສົມບູນ, ມີຄວາມຖືກຕ້ອງສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ໃນປັດຈຸບັນ, ສາມາດພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ XI ທີ່ຈະມາເຖິງນີ້ ແລະ ນໍາໃຊ້ໄດ້ຍາວນານ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ) ຮ່ວມກັບມູນນິທິເອເຊຍ.

(ສົມວິຈິດ ໄຊມິນຕີ)

## ສສຊ...

(ສພຊ) ວັນທີ 25 ກັນຍາ ຜ່ານມານີ້, ທ່ານ ຄໍາສິງ ໄຊສົມແພງ ຮອງປະທານກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 14 ແຂວງສາລະວັນ ຮ່ວມກັບທ່ານ ສີເຮັງ ທອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈໍາເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ພົບປະຢ້ຽມຢາມ ແລະ ເຜີຍແຜ່ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ຂອງ ສພຂ ສາລະວັນ ຊຸດທີ II; ໃນໂອກາດດັ່ງກ່າວ, ທ່ານ ສີເຮັງ ທອມສົມບັດ ໄດ້ມີຄໍາເຫັນໂອ້ລົມ ແລະ ເນັ້ນກ່ຽວກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ໃຫ້ຄະນະພັກນາຍບ້ານ ແລະ ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ບ້ານໂຮງສາຍທອງ ເມືອງລະຄອນເພັງ ແຂວງສາລະວັນ ໃຫ້ມີສ່ວນຮ່ວມຢ່າງຕັ້ງໜ້າ ດັ່ງນີ້:

ຕໍ່ກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ຄະນະພັກ, ນາຍບ້ານ ແລະ ຄອບຄົວ ເປັນເຈົ້າການໃນການຕິດຕາມ ກວດກາ ເກັບກໍາຂໍ້ມູນເບາະແສ ເປົ້າໝາຍການຄ້າ-ຂາຍ ແລະ ເສບ ເພື່ອສະຫລຸບລາຍງານໃຫ້ແຕ່ລະຂັ້ນເພື່ອຮັບຊາບ ພ້ອມທັງສຶກສາອົບຮົມລູກຫລານຂອງຕົນໃຫ້ມີສະຕິ ແລະ ຫ່າງໄກຕໍ່ສິ່ງເສບຕິດທຸກຢ່າງທີ່ຜິດກົດໝາຍ, ປັບປຸງລະບຽບການຂອງບ້ານໃຫ້ເຂົ້າລົບ ແລະ ຮ່ວມກັນຈັດຕັ້ງປະຕິບັດໃຫ້ມີຜົນສັກສິດ, ເປັນເຈົ້າການປົກປ້ອງ ແລະ ເປັນຫູເປັນຕາໃຫ້ອໍານາດການປົກຄອງເມືອງ ໃນການຮັກສາຄວາມສະຫງົບຕາມເຂດຊາຍແດນຢ່າງເຂັ້ມງວດ; ຕິດຕາມ ແລະ ຊຸກຍູ້ໃຫ້ລູກຫລານທີ່ຈະເດີນທາງໄປເຮັດວຽກຢູ່ປະເທດເພື່ອນບ້ານຕ້ອງພົວພັນປະສານງານກັບພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ ອອກໜັງສືໃຫ້ຖືກຕ້ອງຕາມກົດໝາຍ ເພື່ອສະດວກໃນການຕິດຕາມ ແລະ ຄຸ້ມຄອງແຮງງານ.

ຕໍ່ກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ພໍ່ແມ່ປະຊາຊົນ ເອົາໃຈໃສ່ທໍາການຜະລິດ ແລະ ປູກຝັງລ້ຽງສັດ ໃຫ້ກາຍເປັນສິນຄ້າ ຜະລິດໃຫ້ຫລາຍ, ນໍາໃຊ້ທີ່ດິນຂອງຕົນທີ່ມີໃຫ້ເກີດປະໂຫຍດສູງສຸດ ໂດຍການຫັນປ່ຽນຈາກການປູກຝັງແຕ່ຢ່າງດຽວ ສູ່ການປູກຝັງທີ່ຫລາກຫລາຍ ສາມາດສະໜອງສິນຄ້າໃຫ້ຕະຫລາດຜູ້ບໍລິໂພກໄດ້ຊົມໃຊ້ ເພື່ອເປັນການສ້າງລາຍຮັບໃຫ້ແກ່ຄອບຄົວກຸ້ມຢູ່ກຸ້ມກິນ ແລະ ທັງເປັນການປະກອບສ່ວນເຂົ້າໃນການສ້າງສາພັດທະນາບ້ານ, ເມືອງ ແລະ ແຂວງ ມີເສດຖະກິດດີຂຶ້ນເປັນກ້າວໆ.

(ດີລໍາພົນ ພົມມະຈັນ)



## ສະຫລຸບ...

ຊ່ວຍວຽກໃນຄະນະກອງທຶນດັ່ງກ່າວ ພ້ອມດ້ວຍສາມອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບງົບປະມານໃນການຮັບໃຊ້ໃນງານແຂ່ງຂັນກິລາລົດຖີບມິດຕະພາບລາວ-ຫວຽດນາມ ແລະ ຖອດຖອນບົດຮຽນທາງດ້ານຕ່າງໆ ເປັນຕົ້ນແມ່ນທາງດ້ານພິທີ, ການຈັດວາງສະຖານທີ່, ການລົງທະບຽນຜູ້ເຂົ້າຮ່ວມແຂ່ງຂັນ, ການສ້າງຂະບວນການສິລະປະ-ກິລາ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ; ພ້ອມນັ້ນ, ກອງປະຊຸມ ຍັງໄດ້ພ້ອມກັນປຶກສາຫາລືກ່ຽວກັບການກະກຽມໃຫ້ແກ່ການເຮັດບຸນເພື່ອອຸທິດເຖິງບັນດາທ່ານອາດີດການນຳຂອງສະພາແຫ່ງຊາດ ທີ່ໄດ້ລ່ວງລັບໄປແລ້ວນັ້ນຕື່ມອີກ.

(ນາງ ກຸກກິກ ບຸດດາໄຊ)



## ຕິດຕາມ...

ຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຂອງກຳມາທິການວັດທະນະທຳ-ສັງຄົມສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແລະ ທ່ານ ພູວົງ ບຸນຊູ ກຳມະການພັກແຂວງ, ຮອງເຈົ້າແຂວງວຽງຈັນ ໂດຍມີທ່ານ ບຸນສອນ ເພັດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ, ພ້ອມດ້ວຍຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ ເພື່ອສຶກສາຄົ້ນຄວ້າ, ເກັບກຳສະພາບການວ່າງງານຂອງແຮງງານລາວ, ການເຝິກວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ, ການຈັດຫາງານ, ການຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ, ຄວາມປອດໄພ, ສຸຂະພາບແຮງງານ ແລະ ນຳເອົາຂໍ້ມູນມາວິເຄາະວິໄຈ ໃຫ້ເຫັນສະພາບ, ຜົນສຳເລັດ, ຂໍ້ທີ່ຍັງຄົງຄ້າງ ແລະ ສາເຫດທີ່ພາໃຫ້ເກີດຂໍ້ຄົງຄ້າງ ເພື່ອລາຍງານຜົນການຕິດຕາມກວດກາຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມກັນນັ້ນ, ຍັງໄດ້ສືບຕໍ່ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະຢູ່ຂັ້ນເມືອງ ແລະ ບັນດາໂຮງຈັກໂຮງງານ ໃນຂອບເຂດແຂວງວຽງຈັນຕື່ມອີກ.

## ປະທານ...

ເນື່ອງໃນໂອກາດສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ຣັດເຊຍ ຄົບຮອບ 62 ປີ (07/10/1960-07/10/2022) ໃນວັນທີ 10 ຕຸລາຜ່ານມານີ້, ທີ່ຫໍສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ໃຫ້ສຳພາດກັບສຳນັກຂ່າວສານ ITAR TASS ຂອງສະຫະພັນຣັດເຊຍ ເຊິ່ງທ່ານໄດ້ກ່າວວ່າ:

ລາວ-ຣັດເຊຍ ມີມູນເຊື້ອພົວພັນ ແລະ ຮ່ວມມືມາແຕ່ດົນນານ, ຣັດເຊຍ ເປັນເພື່ອນເກົ່າແກ່ຜູ້ສະໜິດສະໜົມ ແລະ ໄວ້ເນື້ອເຊື່ອໃຈຂອງປະຊາຊົນລາວບັນດາເຜົ່າ ພວກຂ້າພະເຈົ້າຍັງຈົດຈຳບຸນຄຸນຂອງປະຊາຊົນໂຊຫວຽດໃນສະໄໝຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານໃນເມື່ອກ່ອນ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອຢ່າງໃຫຍ່ຫລວງຮອບດ້ານໃຫ້ແກ່ປະຊາຊົນລາວ ເຊິ່ງເປັນການປະກອບສ່ວນສຳຄັນໃນໄຊຊະນະປົດປ່ອຍປະເທດຊາດຢ່າງສົມບູນ ໃນປີ 1975; ໃນເວລາດຽວກັນນັ້ນ, ສະຫະພາບໂຊຫວຽດ ຍັງໄດ້ໃຫ້ການຊ່ວຍເຫລືອດ້ານການກໍ່ສ້າງຊັບພະຍາກອນມະນຸດ ດ້ວຍການຮັບເອົານັກສຶກສາລາວຫລາຍພັນຄົນໄປສຶກສາໃນສາຂາອາຊີບຕ່າງໆ ເຊິ່ງປັດຈຸບັນພວມເປັນກຳລັງແຮງເຂັ້ມແຂງໃນກົງຈັກພັກ-ລັດ ຂອງ ສປປລາວ ເຊິ່ງຫລາຍທ່ານໄດ້ເປັນການນຳຂັ້ນສູງທີ່ສຳຄັນໃນ ສປປລາວ; ສະຫະພາບໂຊຫວຽດໃນເມື່ອກ່ອນໄດ້ຊ່ວຍເຫລືອພັດທະນາພື້ນຖານໂຄງລ່າງ ອັນສຳຄັນຫລາຍຢ່າງ ອັນເປັນການ ປະກອບສ່ວນເຮັດໃຫ້ເສດຖະກິດ-ສັງຄົມ ຂອງ ສປປລາວ ໄດ້ຮັບການຂະຫຍາຍຕົວຢ່າງຕໍ່ເນື່ອງ ເປັນຕົ້ນ ການກໍ່ສ້າງຂົວທາງ, ໂຮງງານ, ໂຮງໝໍ ແລະ ອື່ນໆ. ມາໃນໄລຍະປັດຈຸບັນ, ສະຫະພັນຣັດເຊຍ ຍັງສືບຕໍ່ໃຫ້ການຊ່ວຍເຫລືອລາວຢ່າງຮອບດ້ານ ຄື: ດ້ານການເມືອງ-ຄວາມໝັ້ນຄົງ, ເສດຖະກິດການລົງທຶນ, ສຶກສາ, ວັດທະນະທຳ ແລະ ອື່ນໆ.

ພາຍຫລັງໄດ້ສ້າງສາຍພົວພັນກັບອາຊຽນ ໃນປີ 1991 ເປັນຕົ້ນມາ, ການຮ່ວມມືອາຊຽນ-ຣັດເຊຍ ໄດ້ຮັບການເສີມຂະຫຍາຍເປັນກ້າວໆມາ ແລະ ໄດ້ຍົກລະດັບຂຶ້ນເປັນຄູ່ຮ່ວມຍຸດທະສາດຂອງອາຊຽນ ໃນປີ 2018, ການຮ່ວມມື ລະຫວ່າງອາຊຽນ-ຣັດເຊຍ ໄດ້ກວມເອົາຫລາຍຂະແໜງການພາຍໃຕ້ການຮ່ວມມື 3 ເສົາຄ້ຳອາຊຽນ ຄື: ການເມືອງ-ຄວາມໝັ້ນຄົງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ; ບົນພື້ນຖານການຮ່ວມມືລະຫວ່າງອາຊຽນ ແລະ ຣັດເຊຍ ທີ່ມີທ່າແຮງຫລາຍໆດ້ານນີ້ຫວັງວ່າການພົວພັນ, ຮ່ວມມືໃນຕໍ່ໜ້າຈະສືບຕໍ່ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ, ສືບຕໍ່ປະກອບສ່ວນປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

ພ້ອມດຽວກັນນັ້ນ, ກໍມີຄວາມພາກພູມໃຈທີ່ເຫັນວ່າ ຕະຫລອດໄລຍະຜ່ານມາ ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາສູງ ແຫ່ງ ສະຫະພັນຣັດເຊຍ ໄດ້ຮັບການເສີມຂະຫຍາຍເປັນຢ່າງດີ ແລະ ຕໍ່ເນື່ອງ, ມີການແລກປ່ຽນຢ້ຽມຢາມ ເຊິ່ງກັນ ແລະກັນ ເປັນປົກກະຕິເປັນຕົ້ນແມ່ນການແລກປ່ຽນຄະນະຜູ້ແທນຂັ້ນສູງລະດັບປະທານ, ຮອງປະທານສະພາ, ກຳມາທິການ, ຄະນະມິດຕະພາບລັດຖະສະພາຂອງສອງປະເທດ. ໃນປີ 2013 ປະທານສະພາແຫ່ງຊາດລາວ ແລະ ປະທານສະພາສູງຣັດເຊຍ ໄດ້ລົງນາມບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມືນຳກັນ, ໃນປີ 2018 ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະກັບທ່ານ ນາງ ວາເລນຕີນາ ມັດວຽນໂກ ປະທານສະພາສູງ ແຫ່ງ ສະຫະພັນຣັດເຊຍ ໃນໂອກາດເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືແມ່ຍິງເອີຣົບ-ອາຊີ ຄັ້ງທີ 2 ທີ່ຊັງປີເຕີສະເບີກ. ໃນເດືອນຕຸລາ 2021 ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ປະກອບເປັນຄະນະຜູ້ແທນຂັ້ນສູງ ຂອງ ສປປລາວ ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືແມ່ຍິງເອີຣົບ-ອາຊີ ຄັ້ງທີ 3 (ແບບທາງໄກ); ນອກຈາກນີ້, ສອງອົງການນິຕິບັນຍັດ ໄດ້ມີການຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນ ແລະກັນ ຢູ່ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນໃນຂອບຂອງ AIPA, IPU, APPF, ASEAP, EURASIA ແລະ ເວທີປຶກສາຫາລືລັດຖະສະພາອື່ນໆ ແລະ ວັນທີ 16 ທັນວາ 2021 ຜ່ານມານີ້, ໄດ້ພົບປະນຳທ່ານ ນາງ ວາເລັນຕີນາ ມັດວຽນໂກ ປະທານສະພາສູງ ແຫ່ງ ສະຫະພັນຣັດເຊຍ ຜ່ານລະບົບທາງໄກ ເຊິ່ງໄດ້ທົບທວນຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງການຮ່ວມມື ໂດຍພື້ນຖານສອງສະພາແຫ່ງຊາດ ໄດ້ເຫັນດີເປັນເອກະພາບໃນການສືບຕໍ່ພົວພັນຮ່ວມມືໃນຕໍ່ໜ້າ ແລະ ໄດ້ເປັນເອກະພາບປັບປຸງບົດບັນທຶກຊ່ວຍຈຳ ເພື່ອສອດຄ່ອງກັບສະພາບປັດຈຸບັນ ແລະ ເຊື່ອໝັ້ນວ່າໃນຕໍ່ໜ້າປະທານສະພາສູງຣັດເຊຍຈະມາຢ້ຽມຢາມ ສປປລາວ ໃນເວລາທີ່ເໝາະສົມ.

ນັບແຕ່ປີ 2019 ເປັນຕົ້ນມາ, ປະຊາຄົມໂລກໄດ້ປະເຊີນກັບການແຜ່ລະບາດຂອງພະຍາດໂຄວິດ-19, ນັບແຕ່ມີການລະບາດຢູ່ ສປປລາວ ຮອດປັດຈຸບັນ, ມີຜູ້ຕິດເຊື້ອສະສົມຈຳນວນ 213.072 ຄົນ ແລະ ເສຍຊີວິດ 664 ຄົນ ອົງການຈັດຕັ້ງພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າໄດ້ເອົາໃຈໃສ່ຮ່ວມກັນຈັດຕັ້ງມາດຕະການຢ່າງເຂັ້ມງວດໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ສຸມໃສ່ຈັດຕັ້ງການສັກຢາວັກຊີນໃຫ້ບັນລຸຕາມເປົ້າໝາຍໃນທົ່ວປະເທດ; ພາຍຫລັງເປີດປະເທດໃນວັນທີ 5 ພຶດສະພາ 2022, ສປປລາວ ໄດ້ມີນະໂຍບາຍຊຸກຍູ້ ແລະ ສົ່ງເສີມການທ່ອງທ່ຽວສີຂຽວ ບົນຈິດໃຈທີ່ກຳນົດເອົາສະຖານທີ່ທ່ອງທ່ຽວຂອງປະເທດ ທີ່ນັກທ່ອງທ່ຽວສາມາດໄປທ່ອງທ່ຽວ, ເອົາໃຈໃສ່ໃນການປັບປຸງໂຄງລ່າງພື້ນຖານ ແລະ ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວຢູ່ແຂວງເປົ້າໝາຍເປັນຕົ້ນໄດ້ປັບປຸງທ່າເຮືອ ແລະ ເສັ້ນທາງເຂົ້າສູ່ແຫລ່ງທ່ອງທ່ຽວ ແລະ ໃນວັນທີ 3 ທັນວາ 2021 ຜ່ານມານີ້, ສປປລາວ ໄດ້ເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ເຊິ່ງເປັນໂຄງການລົງທຶນຮ່ວມກັນກັບ ສປຈີນ ເປັນການຫັນປະເທດທີ່ບໍ່ມີທາງອອກສູ່ທະເລມາເປັນປະເທດເຊື່ອມໂຍງເຊື່ອມຈອດເຂົ້າກັບພາກພື້ນ ແລະ ສາກົນ ເຊິ່ງມີຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ; ນອກນີ້, ກະຊວງຖະແຫລ່ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮ່ວມກັບສື່ມວນຊົນພາຍໃນ ແລະ ຕ່າງປະເທດ ຮ່ວມກັນໂຄສະນາບັນດາແຫລ່ງທ່ອງທ່ຽວທີ່ໂດດເດັ່ນຢູ່ບັນດາແຂວງຂອງລາວ; ໝາຍຈຸດແຫລ່ງທ່ອງທ່ຽວໃນ Google Map, ໂຄສະນາບັນດາແຫລ່ງທ່ອງທ່ຽວລາວຜ່ານສື່ສັງຄົມອອນລາຍ ໃຫ້ແກ່ນັກທ່ອງທ່ຽວ; ນອກຈາກ, ທົ່ງໄຫຫີນຊຽງຂວາງ, ວັດພູຈຳປາສັກ ແລະ ເມືອງຫລວງພະບາງ ທີ່ໄດ້ຮັບຮອງເປັນມໍລະດົກໂລກແລ້ວ ໃນຊຸມປີຕໍ່ໜ້າ ຫີນໜາມໜໍ່ທີ່ແຂວງຄຳມ່ວນ ກໍຈະໄດ້ຖືກຮັບຮອງເປັນມໍລະດົກໂລກເຊັ່ນກັນ. ໃນໂອກາດນີ້, ໂດຍຜ່ານການສຳພາດຂ່າວ inter-tass ທ່ານຍັງໄດ້ເຊື້ອເຊີນນັກທ່ອງທ່ຽວຣັດເຊຍມາທ່ຽວປະເທດລາວ.

ທ່ານປະທານສະພາແຫ່ງຊາດລາວ ຍັງໄດ້ເວົ້າເຖິງຄວາມຊົງຈຳກ່ຽວກັບປະທານ ໄກສອນ ພົມວິຫານ (ພໍ່) ຂອງທ່ານວ່າ: ໃນຊີວິດເຍົາໄວ ຂ້າພະເຈົ້າ ໄດ້ອາໃສຢູ່ກັບຄອບຄົວ ແລະ ໄດ້ໄປສຶກສາຮ່ຳຮຽນ ຢູ່ ສສ.ຫວຽດນາມ ແລະ ສະຫະພາບໂຊວຽດ. ຈົນມາເຖິງປັດຈຸບັນ, ຂ້າພະເຈົ້າ ຍັງຈື່ໄດ້ວ່າ ພໍ່ຂອງຂ້າພະເຈົ້າເຄີຍສັ່ງສອນໃຫ້ຮຽນຮູ້ກ່ຽວກັບແບບແຜນການດຳລົງຊີວິດທີ່ຮຽບງ່າຍ, ມີຄວາມດຸໝັ່ນອົດທົນ, ມີນ້ຳໃຈສາມັກຄີຮັກແພງກັບເພື່ອນຮ່ວມງານ, ກັບມະຫາຊົນ ແລະ ຮັກເຊື້ອແພງຊາດ, ໃກ້ຊິດຕິດແທດ ແລະ ຮຽນຮູ້ນຳມະຫາຊົນ ເພິ່ນຍັງສອນອີກວ່າ: ມະຫາວິທະຍາໄລທີ່ໃຫຍ່ທີ່ສຸດແມ່ນມະຫາຊົນ ດ້ວຍຄຳສັ່ງສອນອັນລ້ຳຄ່າຂອງເພິ່ນ ແລະ ບວກກັບຊີວິດການເຄື່ອນໄຫວເຮັດວຽກຕົວຈິງຂອງຕົນ ໄດ້ນຳເອົາແນວຄິດຂອງການເປັນຜູ້ນຳຂອງເພິ່ນ ມາເປັນເຂັມທິດເຍືອງທາງ ໃຫ້ມີແບບແຜນວິທີເຮັດວຽກທີ່ດີ, ສືບຕໍ່ທະນຸຖະໜອມ ແລະ ຈັດຕັ້ງປະຕິບັດຕາມຄຳສັ່ງສອນຂອງເພິ່ນຈົນທຸກວັນນີ້ ສືບຕໍ່ປະກອບສ່ວນທັງເຫື່ອແຮງ ແລະ ສະຕິປັນຍາ ໃຫ້ແກ່ປະເທດຊາດໃຫ້ນັບມື້ນັບຫລາຍຂຶ້ນ.

ໃນຕອນທ້າຍ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ປະຊາຊົນລາວ ຍາມໃດກໍຍັງສຳນຶກ, ຈົດຈຳ ແລະ ຕີລາຄາສູງຕໍ່ການຊ່ວຍເຫລືອຢ່າງໃຫຍ່ຫລວງໃນການພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ ສປປລາວ ຂອງສະຫະພາບໂຊວຽດໃນເມື່ອກ່ອນ ກໍຄື ສະຫະພັນຣັດເຊຍ ໃນປັດຈຸບັນ ເຊິ່ງເປັນການຊ່ວຍເຫລືອອັນລ້ຳຄ່າ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາ ແລະ ສ້າງສາປະເທດ, ປະກອບສ່ວນທຶນຮອນອັນປະເສີດແກ່ ສປປລາວ; ປັດຈຸບັນ, ລັດຖະບານຣັດເຊຍ ໄດ້ໃຫ້ທຶນຈຳນວນ 90 ກວ່າຄົນໃນແຕ່ລະປີ ແລະ ຈຳນວນນັກສຶກສາລາວ ທີ່ກຳລັງສຶກສາຮ່ຳຮຽນ ຢູ່ ຣັດເຊຍ ມີເຖິງ 699 ຄົນ ໂດຍຮຽນຫລາຍວິຊາຊີບ ເປັນຕົ້ນ: ການພົວພັນການຕ່າງປະເທດ, ກົດໝາຍ, ເສດຖະກິດ-ການຄ້າ, ວິສະວະກຳສາດ, ແພດສາດ ແລະ ອື່ນໆ ເຊິ່ງລ້ວນແຕ່ເປັນວິຊາສຳຄັນໃນພັດທະນາສ້າງສາປະເທດ; ໃນຖານະທີ່ເປັນອາດີດນັກສຶກສາລາວຄົນໜຶ່ງທີ່ຮຽນຈົບຈາກມະຫາວິທະຍາໄລໂລໂມໂນຊົບ ສະຫະພາບໂຊຫວຽດ, ໃນເວລາເປັນນັກສຶກສາຢູ່ຣັດເຊຍ ໄດ້ຮຽນຮູ້ເຖິງວັດທະນະທຳ-ຮີດຄອງປະເພນີ, ດົນຕີ ແລະ ອາຫານຣັດເຊຍ ຮຽນຮູ້ໄດ້ນ້ຳໃຈເອື້ອເຟື້ອເພື່ອແຜ່, ຄວາມຈິງໃຈ ແລະ ຮັກແພງ, ເສຍສະຫລະຂອງຄົນຣັດເຊຍ ໃນເວລາທີ່ສຶກສາຮ່ຳຮຽນຢູ່ສະຫະພາບໂຊຫວຽດ ເປັນໄລຍະເວລາທີ່ດີທີ່ສຸດ ທີ່ບໍ່ມີວັນລືມໄດ້ ແລະ ຍັງຈະຢູ່ໃນຄວາມຊົງຈຳທີ່ດີຕະຫລອດໄປ.

## ຖອດຖອນ...

II, ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງແຂວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານ ສຈ. ປອ ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງແຂວງວຽງຈັນ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ, ໄດ້ຮັບຟັງການສະຫລຸບຕີລາຄາດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ທິດທາງໃນຕໍ່ໜ້າ; ພ້ອມນັ້ນ, ບັນດາທ່ານຜູ້ແທນກອງປະຊຸມ ຍັງໄດ້ສົນທະນາ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງມີຈຸດສຸມ ແລະ ກົງໄປກົງມາ.

ໃນໂອກາດນີ້, ທ່ານປະທານກອງປະຊຸມ ຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ປັບປຸງຂໍ້ທີ່ຍັງຄົງຄ້າງ ແລະ ເພື່ອເປັນການປັບປຸງການລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດໃນຄັ້ງຕໍ່ໄປໃຫ້ດີຂຶ້ນກວ່າເກົ່າ.

## ສສຊ ແລະ ສພຂ ຫລວງພະບາງ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມ



(ສພຊ) ໃນລະຫວ່າງວັນທີ 19-28 ກັນຍາ 2022 ທ່ານ ສິງຕັນ ໄຊລືຊົ່ງ ຮອງປະທານສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ໄດ້ລົງຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຢູ່ເມືອງໂພນທອງ ແຂວງຫລວງພະບາງ ລວມທັງໝົດ 5 ຈຸດຄື: ສຳນັກເມືອງໂພນທອງ, ບ້ານຫ້ວຍເຮ້ຍ, ບ້ານທອງເໜືອ, ບ້ານທອງສີ ແລະ ບ້ານກາງ.

ການເຄື່ອນໄຫວໃນຄັ້ງນີ້, ແມ່ນນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ມາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນເມືອງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ບັນຫາສຳຄັນຕ່າງໆ ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມຂອງ ສພຂ ຊຸດທີ II, ພ້ອມທັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ເຊິ່ງເຫັນໄດ້ຫລາຍບັນຫາທີ່ຕິດພັນກັບວຽກງານ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານອື່ນໆ ຈຳນວນໜຶ່ງ

ຕອນທ້າຍ, ທ່ານ ສິງຕັນ ໄຊລືຊົ່ງ ໄດ້ອະທິບາຍຊີ້ແຈງຕໍ່ກັບຄຳສະເໜີຕ່າງໆ ໃຫ້ຜູ້ມີສິດເລືອກຕັ້ງເຂົ້າໃຈກັບທີ່ ແລະ ຮັບເອົາບາງຄຳສະເໜີ ເພື່ອນຳໄປຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ ແລະ ແກ້ໄຂໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ພ້ອມດຽວກັນນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ແຕ່ລະບ້ານ, ເອົາໃຈໃສ່ຍົກສູງ, ດ້ານຄວາມສາມັກຄີພາຍໃນບ້ານໃຫ້ໜັກແໜ້ນ, ເປັນເຈົ້າການໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ໃຫ້ຖືກຕ້ອງ, ຕ້ານ ແລະ ສະກັດກັ້ນການຄ້າ-ຂ້າຍ, ການເສບຢາເສບຕິດພາຍໃນບ້ານ, ເມືອງຂອງຕົນໃຫ້ຫລຸດນ້ອຍຖອຍລົງເທື່ອລະກ້າວ, ເພື່ອເຮັດໃຫ້ບ້ານ-ເມືອງມີຄວາມສະຫງົບ ແລະ ປອດໄພຈາກຢາເສບຕິດເທື່ອລະກ້າວ.

ໃນໂອກາດນີ້, ທ່ານຍັງໄດ້ນຳເອົາ ຄອມພິວເຕີ ຕັ້ງໂຕະຈຳນວນ 1 ຊຸດ ມອບໃຫ້ເມືອງເພື່ອນຳໃຊ້ເຂົ້າໃນວຽກງານໃຫ້ມີຄວາມສະດວກວ່ອງໄວຂຶ້ນກວ່າເກົ່າ.

ໃນໄລຍະດຽວກັນ, ທ່ານ ປອ. ວົງເພັດ ອຸດົມລິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງຫລວງພະບາງ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ສພຂ ຊຸດທີ II ຢູ່ທີ່ເມືອງປາກແຊງ ລວມມີ 5 ຈຸດຄື: ບ້ານຫາດຮວຍ, ບ້ານສະຄົງ, ບ້ານສົບແຈກ, ບ້ານໜອງຟ້າແດດ ແລະ ບ້ານຫາດສະງອນ; ເຂົ້າຮ່ວມຮັບຟັງມີສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງ, ມີອົງການປົກຄອງບ້ານ ແລະ ຜູ້ມີສິດເລືອກຕັ້ງ ທັງໝົດ 351 ທ່ານ ຍິງ 147 ທ່ານ.

ການເຄື່ອນໄຫວວຽກຄັ້ງນີ້, ແມ່ນໄດ້ຮັບຟັງການລາຍງານສະພາບໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການ 1 ປີຕໍ່ໜ້າ ຈາກຕາງໜ້າຂອງອົງການປົກຄອງ 5 ບ້ານດັ່ງກ່າວ ຊຶ່ງກໍໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍບັນຫາ. ຈາກນັ້ນ, ທ່ານ ປອ. ວົງເພັດ ອຸດົມລິດ ໄດ້ຂຶ້ນເຜີຍແຜ່ເນື້ອໃນຈິດໃຈຜົນສຳເລັດຂອງ 2 ກອງປະຊຸມດັ່ງກ່າວ ໃຫ້ບັນດາຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ບັນຫາສຳຄັນຕ່າງໆ ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມຂອງສະພາແຫ່ງຊາດ ແລະ ສພຂ. ພ້ອມນີ້, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຂໍ້ຂັດຂ້ອງໝອງໃຈຂອງຜູ້ມີສິດເລືອກຕັ້ງ ເຊິ່ງເຫັນໄດ້ຫລາຍບັນຫາ ທີ່ຕິດພັນກັບ ວຽກງານການພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານອື່ນໆ.

ພ້ອມດຽວກັນນັ້ນ, ທ່ານ ປອ ວົງເພັດ ອຸດົມລິດ ໄດ້ອະທິບາຍ, ຊີ້ແຈງ ຕໍ່ກັບບັນດາຄຳສະເໜີຕ່າງໆ ໃຫ້ຜູ້ມີສິດເລືອກຕັ້ງເຂົ້າໃຈ ຊຶ່ງບາງຄຳສະເໜີກໍອະທິບາຍຊີ້ແຈງກັບທີ່ ແລະ ຮັບເອົາບາງຄຳສະເໜີ ເພື່ອນຳໄປຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຕາມພາລະບົດບາດ ພ້ອມທັງໄດ້ຮຽກຮ້ອງໃຫ້ ອົງການປົກຄອງ 5 ບ້ານ ກໍຄືປະຊາຊົນພາຍໃນບ້ານ ຈົ່ງສືບຕໍ່ເອົາໃສ່ວຽກງານການສ້າງເສດຖະກິດຄອບຄົວ ໂດຍສະເພາະແມ່ນການປູກຝັງ-ລ້ຽງສັດ, ພ້ອມທັງປຸກລະດົມເຕົ້າໂຮມຄວາມສາມັກຄີພາຍໃນ, ການຮັກສາຄວາມສະຫງົບພາຍໃນບ້ານ, ການຮັກສາວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ ພ້ອມທັງເອົາໃຈໃສ່ ຍົກສູງສິດເປັນເຈົ້າ ໃນການຈັດຕັ້ງປະຕິບັດ ບັນດານະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ກໍຄືມະຕິກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໂດຍສະເພາະແມ່ນ 2 ວາລະແຫ່ງຊາດ ໃຫ້ບຸນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້. ໃນໂອກາດລົງເຄື່ອນໄຫວຄັ້ງນີ້ ທ່ານ ຍັງໄດ້ນຳເອົາຜາປິດປາກ ຈຳນວນ 50 ກັບ ແລະ ເຈວລ້າງມື ຈຳນວນ 50 ກ່ອງ ມອບໃຫ້ 5 ບ້ານ ດັ່ງກ່າວ.

(ວິສະນຸ ເພັດສຸພັນ)

## ສຳເລັດການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 3



(ສພຊ) ໃນລະຫວ່າງວັນທີ 27 ກັນຍາ-4 ຕຸລາ 2022 ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະຂ ແຂວງ ຊຸດທີ II ຢູ່ບັນດາພະແນກການ ແລະ ອົງການຈັດຕັ້ງຈຳນວນໜຶ່ງອ້ອມຂ້າງແຂວງ ໂດຍສະເພາະບັນດາພະແນກການ, ອົງການຈັດຕັ້ງ ທີ່ຢູ່ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ປະກອບມີພະແນກສຶກສາ ແລະ ກິລາແຂວງ, ພະແນກສາທາລະນະສຸກແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ອົງການແນວລາວສ້າງຊາດແຂວງ, ພະແນກພາຍໃນແຂວງ, ສະຫະພັນນັກຮົບເກົ່າ ແລະ 3 ອົງການຈັດຕັ້ງມະຫາຊົນ ເຊິ່ງໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກຄະນະນຳຂອງບັນດາພະແນກການ ພ້ອມດ້ວຍພະນັກງານ-ລັດຖະກອນຂອງແຕ່ລະພາກສ່ວນໄດ້ມີຄວາມເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ການພົບປະເຜີຍແຜ່ບັນດາເນື້ອໃນຕ່າງໆຂອງກອງປະຊຸມເປັນຢ່າງດີ.

ການພົບປະຜູ້ມີສິດເລືອກຕັ້ງຄັ້ງນີ້, ແມ່ນເພື່ອນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໂດຍຕິດພັນກັບການຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດ ເພື່ອໃຫ້ພະນັກງານ-ລັດຖະກອນ ໃນຖານະຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ເຊື່ອມຊຶມ.

ໃນການເຄື່ອນໄຫວແຕ່ລະຈຸດ ໄດ້ຮັບຟັງການລາຍງານໂດຍສັງເຂບຈາກບັນດາພະແນກການ ພ້ອມທັງມີການແລກປ່ຽນຄຳຄິດຄຳເຫັນ, ຄຳສະເໜີທີ່ພົວພັນກັບຂົງເຂດວຽກງານຂອງຕົນເຊິ່ງຕໍ່ກັບບັນດາຄຳສະເໜີທີ່ແຕ່ລະພະແນກການສະເໜີມານັ້ນມີບາງບັນຫາ ຄວສຜ ຈະໄດ້ນຳໄປຄົ້ນຄວ້າ, ປຶກສາຫາລື ແລະ ລາຍງານຕໍ່ກອງປະຊຸມຄະນະປະຈຳ ສພຂ ພ້ອມທັງສະເໜີໄປຍັງພາກສ່ວນທີ່ກ່ຽວຂ້ອງເພື່ອຊີ້ແຈງ ແລະ ແກ້ໄຂ ລວມທັງບາງບັນຫາທີ່ຕິດພັນກັບຂັ້ນສູນກາງແມ່ນຈະໄດ້ນຳຄົ້ນຄວ້າ, ປຶກສາຫາ ແລະ ລາຍງານໃນຂັ້ນຕໍ່ໄປ ເພື່ອມີທິດຊີ້ນຳໃນການແກ້ໄຂ.

ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ມີການເຜີຍແຜ່ບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ບາງມາດຕາຂອງກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ຜູ້ມີສິດເລືອກຕັ້ງໃນແຕ່ລະຂົງເຂດ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ເຄື່ອນໄຫວໃນໄລຍະຜ່ານມາ.

(ວັນນະສຸກ ອິນສີຊຽງໃໝ່)

## ເຊື່ອມຊຶມເອກະສານສຳຄັນ ແລະ ສະຫລຸບຕີລາຄາການນຳພາຂອງໜ່ວຍພັກ



(ສພຊ) ຕອນເຊົ້າຂອງວັນທີ 22 ກັນຍາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດພິທີເຊື່ອມຊຶມເອກະສານຂອງພັກ, ກຳມະບານ ແລະ ດຳເນີນຊີວິດພັກປະຈຳເດືອນກັນຍາ 2022 ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກ ສພຂ, ມີບັນດາສະຫາຍຄະນະປະຈຳ, ຄະນະໜ່ວຍພັກ, ສະມາຊິກພັກສົມບູນ-ສຳຮອງ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ການຜັນຂະຫຍາຍບັນດາເອກະສານຄັ້ງນີ້, ແມ່ນເພື່ອໃຫ້ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈບັນດາເນື້ອໃນສຳຄັນຂອງແຕ່ລະເອກະສານ ເຊິ່ງປະກອບມີເອກະສານຄື: ມະຕິຂອງຄະນະບໍລິຫານງານພັກແຂວງ ສະບັບເລກທີ 898/ຄບພຂ, ລົງວັນທີ 6 ກັນຍາ 2022 ວ່າດ້ວຍການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານຢູ່ແຂວງອຸດົມໄຊ, ມູນເຊື້ອການກຳເນີດ ແລະ ເຕີບໂຕຂະຫຍາຍຕົວຂອງສະຫະພັນກຳມະບານແຂວງອຸດົມໄຊ ຄົບຮອບ 43 ປີ (11 ກັນຍາ 1979-11 ກັນຍາ 2022) ແລະ ບົດແນະນຳວ່າດ້ວຍການຈັດຕັ້ງ 2 ວາລະແຫ່ງຊາດ ສະບັບເລກທີ 533/ສກຂ, ລົງວັນທີ 2 ສິງຫາ 2022.

ພາຍຫລັງສຳເລັດການເຊື່ອມຊຶມບັນດາເອກະສານ, ໜ່ວຍພັກດັ່ງກ່າວໄດ້ສືບຕໍ່ດຳເນີນຊີວິດພັກ ປະຈຳເດືອນກັນຍາ 2022, ໄດ້ສະຫລຸບຕີລາຄາການນຳພາຂອງໜ່ວຍພັກ ສພຂ ປະຈຳເດືອນກັນຍາ ແລະ ວາງທິດທາງແຜນການປະຈຳເດືອນຕຸລາ 2022. ພ້ອມກັນນັ້ນ, ບັນດາສະຫາຍສະມາຊິກພັກໄດ້ປະກອບຄຳຄິດຄຳເຫັນ ແລະ ຕຳນິສິ່ງຂ່າວເຊິ່ງກັນແລະກັນ ຍົກໃຫ້ເຫັນດ້ານອ່ອນ-ຂໍ້ຄົງຄ້າງ ພ້ອມທັງຊອກຫາວິທີແກ້ໄຂໃນຕໍ່ໜ້າ ໃຫ້ດີຂຶ້ນກວ່າເກົ່າ.

(ນັກຂ່າວ ສພຂ ອຸດົມໄຊ)

## ຄະນະຜູ້ແທນ ສພຂ ຫົວພັນ ຢ້ຽມຢາມຂ່ຳນັບ ປະທານ ສພຂ ແທັງຮວ່າ



(ສພຂ) ໃນຕອນບ່າຍວັນທີ 27 ກັນຍາ 2022 ຢູ່ທີ່ຫ້ອງຮັບແຂກຫ້ອງວ່າການແຂວງແທັງຮວ່າ ສສ.ຫວຽດນາມ ນຳໂດຍສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຮອງເລຂາພັກ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8, ປະທານສະພາປະຊາຊົນແຂວງ (ສພຂ) ຫົວພັນ ພ້ອມດ້ວຍຄະນະຜູ້ແທນ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ໂດ ຈ້ອງ ຮຶ່ງ ກຳມະການຄະນະບໍລິຫານງານສູນກາງພັກ, ເລຂາພັກແຂວງ ປະທານ ສພຂ ແທັງຮວ່າ ສສ.ຫວຽດນາມ, ໃນໂອກາດຄະນະຜູ້ແທນ ສພຂ ຫົວພັນ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງແທັງຮວ່າ ສສ.ຫວຽດນາມ ໃນລະຫວ່າງ ວັນທີ 28-30 ກັນຍາຜ່ານມາ.

ໃນການຢ້ຽມຂ່ຳນັບຄັ້ງນີ້ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ໃຫ້ ສະຫາຍເລຂາພັກແຂວງ, ປະທານສະພາປະຊາຊົນແຂວງແທັງຮວ່າ ສສ. ຫວຽດນາມ ໄດ້ຮັບຊາບ.

ພ້ອມນັ້ນ, ຍັງໄດ້ສະແດງຄວາມຂອບໃຈໃນການຕ້ອນຮັບຢ່າງອົບອຸ່ນ ຈາກການນຳຂອງແຂວງ, ສະພາປະຊາຊົນແຂວງແທັງຮ່ວາ ທີ່ໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຄະນະຜູ້ແທນໄດ້ເຄື່ອນໄຫວເຮັດວຽກ ແລກປ່ຽນບົດຮຽນໃນຄັ້ງນີ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.

(ນັກຂ່າວ ສພຂ ຫົວພັນ)

# ສພຂ ອຸດົມໄຊ ພົບປະຜູ້ມີສິດເລືອກຕັ້ງ ແລະ ມອບເຄື່ອງຊ່ວຍເຫລືອຜູ້ປະສົບໄພພິບັດ



(ສພຊ) ລະຫວ່າງວັນທີ 26-28 ກັນຍາ 2022 ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ມອບເຄື່ອງຊ່ວຍເຫລືອໃຫ້ຜູ້ປະສົບໄພພິບັດ ເຊິ່ງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ ອຸດົມໄຊ, ທ່ານ ນາງ ແສງອາລຸນ ປັນຍາລໍ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງນາໝໍ້ ແລະ ທ່ານ ພັຕ. ເພັດສະຫວັນ ໄຊອຸ່ນຄຳ ສສຂ ປະຈຳເຂດເລືອກຕັ້ງເມືອງນາໝໍ້ ແຂວງອຸດົມໄຊ ໄດ້ເຄື່ອນໄຫວພົບປະພົນລະເມືອງຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ທີ່ເມືອງນາໝໍ້ ແຂວງອຸດົມໄຊ ໄດ້ 6 ຈຸດຄື: ບ້ານໄຊສຳພັນ, ບ້ານນາໝໍ້ເໜືອ, ບ້ານຂວາງ, ບ້ານນາສະຫວ່າງ, ບ້ານນ້ຳໂມງ ແລະ ບ້ານໃໝ່ນາເຕົາ ມີຜູ້ເຂົ້າຮ່ວມຮັບທັງໝົດ 414 ຄົນ ຍິງ 136 ຄົນ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບການໂດຍຫຍໍ້ຂອງອົງການປົກຄອງບ້ານແຕ່ລະບ້ານ ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນ ເຊິ່ງບັນດາຄຳສະເໜີສ່ວນຫລາຍແມ່ນວຽກງານການພັດທະນາ ແລະ ປັບປຸງພື້ນຖານໂຄງລ່າງ ເປັນຕົ້ນແມ່ນບັນຫາເສັ້ນທາງເປ່ເພ, ລະບົບນ້ຳລິນ-ນ້ຳໃຊ້, ປັບປຸງກໍ່ສ້າງອາຄານຮຽນ, ການປູກການລ້ຽງ (ບ່ອນທຳການຜະລິດ) ແລະ ບັນຫາອື່ນທີ່ຕິດພັນກັບຊີວິດປະຈຳວັນຂອງປະຊາຊົນ, ບັນດາຄຳສະເໜີດັ່ງກ່າວ ສສຂ ກໍໄດ້ອະທິບາຍ, ຊີ້ແຈງບາງບັນຫາກັບທີ່ ແລະ ໄດ້ສັງລວມເພື່ອຈະນຳເອົາຂໍ້ສະເໜີສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຕາມພາລະບົດບາດ ແລະ ທັນກັບເວລາ.

ການເຄື່ອນໄຫວຄັ້ງນີ້, ທ່ານ ຄຳເຜີຍ ງອນວັນຄຳ ຫົວໜ້າຄະນະທີມງານ ຍັງໄດ້ມີຄຳຄິດຄຳເຫັນໂອ້ລົມຕໍ່ພໍ່ແມ່ປະຊາຊົນ ໂດຍທ່ານໄດ້ສະແດງຄວາມຊົມເຊີຍຕໍ່ອົງການປົກຄອງທີ່ໄດ້ເອົາໃຈໃສ່ຕໍ່ໜ້າທີ່ຄວາມຮັບຊອບ, ປະກອບສ່ວນໃນການປົກປັກຮັກສາ, ພັດທະນາບ້ານ ກໍຄືການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເປັນກ້າວໆ. ພ້ອມກັນນັ້ນ, ຍັງໄດ້ເນັ້ນໜັກໃຫ້ບັນດາອົງການປົກຄອງບ້ານ ເພີ່ມທະວີຄວາມສາມັກຄີລະຫວ່າງຄະນະບ້ານກັບປະຊາຊົນ, ເປັນເຈົ້າໃນການພັດທະນາບ້ານ ໂດຍສະເພາະແມ່ນການປູກການລ້ຽງເປັນສິນຄ້າ, ຮັບປະກັນຄວາມສະຫງົບສຸກ, ວຽກງານການສຶກ, ວຽກງານສາທາລະນະສຸກ ແລະ ສືບຕໍ່ຮັກສາຮີດຄອງປະເພນີມູນເຊື້ອອັນດີງາມຂອງເຜົ່າ.

ໃນໄລຍະດຽວກັນ, ທ່ານ ຄຳມະນີ ໄຊດວງຕາ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເພົ່າ ສພຂ ແລະ ທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ ໄດ້ເຄື່ອນໄຫວມອບເຄື່ອງບັນເທົາທຸກໃຫ້ປະຊາຊົນຜູ້ປະສົບໄພພິບັດນ້ຳຖ້ວມ ຢູ່ເມືອງຫລາ; ມີທ່ານ ນາງ ໄລວອນ ຈັນທະລາ ສສຂ ປະຈຳເຂດເລືອຕັ້ງເມືອງຫລາ, ບັນດາທ່ານ ສສຂ ປະຈຳເຂດເລືອຕັ້ງເມືອງຫລາ ແລະ ຄະນະຮັບຜິດຊອບເຂົ້າຮ່ວມ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ປະກອບມີເຂົ້າສານ 3,4 ໂຕນ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ ລວມມູນຄ່າທັງໝົດປະມານ 160 ລ້ານກວ່າກີບ ແລະ ໄດ້ຈັດມອບໃຫ້ຄອບຄົວທີ່ຖືກ ໃນຈຳນວນ 13 ບ້ານ ຄື: ຫ້ວຍສູ, ສາມັກຄີໄຊ, ໂພນໄຊ, ຫ້ວຍຫລາ, ປາກກໍ, ດອນສະອາດ, ໜອງບົວ, ວຽງຄຳ, ໂພນສະຫວ່າງ, ປາກກໍຫ້ວຍແພ, ຫາດແອນ, ຫ້ວຍອໍ້ ແລະ ມົກຕືນ.

(ສີແຫວງ ສີບຸນເຮືອງ ແລະ ແສງພອນ ອິນນະລັງ)

# ມອບອຸປະກອນການຮຽນ, ກິລາ ໃຫ້ນັກຮຽນປະຖົມບ້ານນ້ຳຈ້າງ



(ສພຊ) ຕອນເຊົ້າຂອງວັນທີ 6 ຕຸລາ 2022 ສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ມອບອຸປະກອນການຮຽນ, ອຸປະກອນກິລາ ໃຫ້ໂຮງຮຽນປະຖົມສົມບູນບ້ານນ້ຳຈ້າງ ເມືອງຫລວງນ້ຳທາ ແຂວງຫລວງນ້ຳທາ ເນື່ອງໃນໂອກາດວັນຄູແຫ່ງຊາດ ຄົບຮອບ 28 ປີ (7 ຕຸລາ 1994-7 ຕຸລາ 2022) ມອບໂດຍທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ແລະ ຮັບໂດຍທ່ານ ນາງ ໃໝ່ມາລີ ທອງບັນດິດ ອຳນວຍການໂຮງຮຽນປະຖົມສົມບູນບ້ານນ້ຳຈ້າງ ລວມມູນຄ່າທັງໝົດ 2 ລ້ານກວ່າກີບ ເພື່ອແຈກຢາຍໃຫ້ນັກຮຽນໄດ້ນຳໃຊ້ເຂົ້າໃນການຮຽນຫລິ້ນກິລາເພື່ອຫ່າງໄກຈາກສິ່ງເສບຕິດ.

(ນັກຂ່າວ ສພຂ ຫລວງນ້ຳທາ)

# ກຳລັງ ປກຊ-ປກສ ແຂວງອັດຕະປື ເຊື່ອມຊຶມເນື້ອໃນຜົນສຳເລັດກອງປະຊຸມ



(ສພຊ) ຕອນບ່າຍວັນທີ 27 ກັນຍາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນແຂວງ (ສພຂ) ທີ່ຫໍປະຊຸມໃຫ່ຍຂອງແຂວງ ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17, ປະທານ ສພຂ ພ້ອມດ້ວຍຄະນະ; ເຂົ້າຮ່ວມມີ ຄະນະພັກ, ຄະນະນຳ, ນາຍ ແລະ ພົນຂອງສອງກຳລັງ ປກຊ-ປກສ ແຂວງ.

ບັນດາ ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ອະທິບາຍສະພາບ ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືບັນດາເນື້ອໃນມະຕິທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ແລະ ສພຂ ເປັນຕົ້ນແມ່ນເນື້ອໃນມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19. ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ; ແລະ ຮັບຮອງເອົາການເລືອກຕັ້ງປະກອບອົງການກວດສອບແຫ່ງລັດ, ຮັບຮອງເອົາການສະເໜີແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ, ແລະ ເນື້ອໃນມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022.

(ວິນັດ)

# ຮັບເຄື່ອງຊ່ວຍເຫລືອຈາກສະມາຄົມຫວຽດນາມ ປະຈຳແຂວງເຊກອງ



(ສພຊ) ໃນຕອນເຊົ້າວັນທີ 11 ຕຸລາ 2022 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ, ສະມາຄົມຫວຽດນາມ ປະຈຳແຂວງເຊກອງ ແລະ ບໍລິສັດທີ່ມາລົງທຶນພັດທະນາຢູ່ແຂວງເຊກອງຄື: ບໍລິສັດ ວິລາການຄ້າ ຂາອອກ-ຂາເຂົ້າ ຈຳກັດ ແລະ ບໍລິສັດ ວິນນີ ການຄ້າ ຂາອອກ-ຂາເຂົ້າ ໄດ້ນຳເອົາເຄື່ອງຊ່ວຍເຫລືອປະເພດເຂົ້າສານ-ອາຫານແຫ້ງ, ເຄື່ອງນຸ່ງຫົ່ມ ແລະ ອຸປະກອນສຶກສາ-ກິລາ ລວມມູນຄ່າ 15,89 ລ້ານກີບ ແລະ ເງິນສົດຈຳນວນ 5 ລ້ານກີບ ມອບໃຫ້ແກ່ສະພາປະຊາຊົນແຂວງເຊກອງ ເພື່ອນຳໄປມອບຕໍ່ໃຫ້ພໍ່ແມ່ປະຊາຊົນ 4 ຕົວເມືອງ ທີ່ປະສົບໄພພິບັດທາງທຳມະຊາດ (ພະຍຸໂນຣູ) ທີ່ພັດຜ່ານເຂົ້າມາໃນທ້າຍເດືອນແລ້ວນີ້ ເຊິ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ພໍ່ແມ່ປະຊາຊົນຢ່າງໜັກໜ່ວງ.

ຕາງໜ້າກ່າວມອບໂດຍທ່ານ ເຈີ່ນ ດິ່ງ ຣາຍ ປະທານບໍລິສັດ ວິລາການຄ້າ ຂາອອກ-ຂາເຂົ້າ ຈຳກັດ ແລະ ທ່ານ ວິງ ປະທານບໍລິສັດ ວິນນີການຄ້າ ຂາອອກ-ຂາເຂົ້າ ໂດຍການກ່າວຮັບ ແລະ ມອບໃບກຽດຕິຄຸນແມ່ນທ່ານ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໂດຍຊ້ອງໜ້າຄະນະນຳສະພາປະຊາຊົນແຂວງ ແລະ ຄະນະສະມາຄົມຫວຽດນາມ ປະຈຳແຂວງເຊກອງ.

ໂອກາດດັ່ງກ່າວ, ປະທານສະພາປະຊາຊົນແຂວງ ໄດ້ກ່າວສະແດງຄວາມຂອບໃຈ ແລະ ຊົມເຊີຍຕໍ່ພາກສ່ວນດັ່ງກ່າວ ທີ່ໄດ້ນຳເອົາວັດຖຸປັດໄຈມາມອບໃຫ້ສະພາປະຊາຊົນແຂວງ ເຊກອງ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນທີ່ສຳຄັນໃນການຊ່ວຍບັນເທົາທຸກ ແລະ ເປັນຂ້ອນກຳລັງໃຈໃຫ້ແກ່ພໍ່ແມ່ປະຊາຊົນທີ່ປະສົບໄພໃນຄັ້ງນີ້ດ້ວຍ.

(ນາລີວັນ)




| ແຂວງ | ຕິດເຊື້ອສະສົມ | ຕິດເຊື້ອໃໝ່ | ເສຍຊີວິດ |
|---|---|---|---|
| ນະຄອນຫຼວງວຽງຈັນ | 14,008 | 64 | 5 |
| ຫຼວງນ້ຳທາ | 4,055 | 3 | 3 |
| ອັດຕະປື | 1,536 | 0 | 6 |
| ສາລະວັນ | 1,383 | 2 | 3 |
| ສະຫວັນນະເຂດ | 1,198 | 1 | 0 |
| ຫຼວງພະບາງ | 1,267 | 20 | 0 |
| ເຊກອງ | 1,050 | 0 | 1 |
| ວຽງຈັນ | 893 | 10 | 0 |
| ອຸດົມໄຊ | 766 | 0 | 1 |

| ແຂວງ | ຕິດເຊື້ອສະສົມ | ຕິດເຊື້ອໃໝ່ | ເສຍຊີວິດ |
|---|---|---|---|
| ຄຳມ່ວນ | 479 | 2 | 0 |
| ໄຊຍະບູລີ | 480 | 2 | 0 |
| ຈຳປາສັກ | 247 | 0 | 0 |
| ບໍລິຄຳໄຊ | 146 | 2 | 0 |
| ຜົ້ງສາລີ | 149 | 0 | 0 |
| ຊຽງຂວາງ | 113 | 0 | 2 |
| ໄຊສົມບູນ | 92 | 0 | 0 |
| ບໍ່ແກ້ວ | 88 | 1 | 0 |
| ຫົວພັນ | 21 | 0 | 0 |



## ສຸກສະບາຍຫາຍໂລຄາ

# ຜົນຮ້າຍຈາກແສງສີຟ້າຕໍ່ກັບເດັກນ້ອຍ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ຈາກການແຜ່ກະຈາຍຂອງ ພະຍາດໄວຣັດ Corona 2019 (COVID-19) ໃນຫລາຍປະເທດ ລວມທັງປະເທດລາວ ເຮັດໃຫ້ລັດຖະບານໄດ້ປະກາດໂຈະການຮຽນການສອນໃນໄລຍະໜຶ່ງ ຈຶ່ງເຮັດໃຫ້ໂຮງຮຽນປັບການຮຽນ-ການສອນແບບອອນລາຍ ເຮັດໃຫ້ເດັກນ້ອຍໃຊ້ເວລາຫລາຍຊົ່ວໂມງໃນໜ້າຈໍດິຈິຕອນຫລາຍກວ່າປົກປົກກະຕິ; ພຶດຕິກຳເຫລົ່ານີ້ ເຮັດໃຫ້ມີຄວາມສ່ຽງ ໃນການພັດທະນາສາຍຕາ ແລະ ສຸຂະພາບຂອງຕາໄດ້ ເນື່ອງຈາກແສງສີຟ້າທີ່ເກີດຈາກອຸປະກອນດິຈິຕອນຕ່າງໆ ເຊັ່ນ: ຄອມພິວເຕີ, ແທັບເລັດ ແລະ ໂທລະສັບ ທີ່ອາດຈະເປັນອັນຕະລາຍຕໍ່ສາຍຕາຂອງເດັກນ້ອຍ ແລະ ການຫລິ້ນອຸປະກອນເຫລົ່ານີ້ເປັນເວລາດົນຈະນຳບັນຫາ ແລະ ຜົນກະທົບມາສູ່ເດັກນ້ອຍ ທັງໄລຍະສັ້ນ ແລະ ໄລຍະຍາວ.

ອັນຕະລາຍທີ່ເກີດຈາກແສງສີຟ້າປະກອບມີ:

- ພາວະຕາອິດເມື່ອຍ ອ່ອນຫລ້າ ເກີດມາຈາກການເບິ່ງໜ້າຈໍດົນເກີນໄປ ຈຶ່ງເຮັດໃຫ້ການຫົດຂອງກ້າມຊີ້ນໃນສາຍຕາ, ຫົດຢູ່ຕະຫລອດເວລາ ເຮັດໃຫ້ມີອາການຕາເມື່ອຍຫລ້າ ຈຶ່ງເປັນທີ່ມາອາການຕາມົວຊົ່ວຄາວ.
- ໂລກຈໍປະສາດຕາເສື່ອມ (AMD) ແສງສີຟ້າຈາກອຸປະກອນດິຈິຕອນ ຈະກະຕຸ້ນອະນຸມູນອິດສະຫລະທີ່ສາມາດທຳລາຍຈຸລັງປະສາດຕາໄດ້ ຖ້າໃຊ້ເປັນເວລາດົນອາດຈະເພີ່ມຄວາມສ່ຽງເຮັດໃຫ້ເກີດໂລກຈໍປະສາດຕາເສື່ອມໄດ້;
- ສາຍຕາສັ້ນ (myopia pathological) ຍ້ອນຈົດຈໍ່ຢູ່ກັບໜ້າຈໍເປັນເວລາດົນຫລາຍກວ່າ 5 ຊົ່ວໂມງຕໍ່ມື້ ໂດຍສະເພາະໄລຍະຫ່າງບໍ່ເກີນ 20 ຊັງຕີແມັດ ເປັນເວລາຫລາຍກວ່າ 45 ນາທີ ແມ່ນເປັນປັດໄຈໜຶ່ງ ທີ່ເຮັດໃຫ້ສາຍຕາສັ້ນໄວ ແລະ ເປັນຫລາຍໃນກຸ່ມເດັກນ້ອຍ;

ນອກຈາກນັ້ນ, ສາເຫດດັ່ງກ່າວ ບໍ່ພຽງແຕ່ເຮັດໃຫ້ສາຍຕາສັ້ນໄວກ່ວາປົກກະຕິ ແຕ່ຍັງເຮັດໃຫ້ເສຍບຸກຄະລິກກະພາບ ເພາະຈະຕ້ອງໄດ້ຍີ້ຕາຕະຫລອດເວລາ ເມື່ອເບິ່ງບໍ່ແຈ້ງ; ສະນັ້ນ, ເພື່ອຫລີກລ່ຽງ ອັນຕະລາຍຂອງແສງສີຟ້າ ແລະ ປົກປ້ອງດວງຕາຂອງເດັກ ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ມີຄຳແນະນຳທີ່ດີສຳລັບພໍ່ແມ່ຄື:

- ເລືອກໃຊ້ແວ່ນຕາທີ່ມີເລນກອງແສງສີຟ້າ.
- ໃຊ້ຈໍເຄື່ອງດິຈິຕອນທີ່ເໝາະສົມ ແລະ ປັບແສງສະຫວ່າງໜ້າຈໍໃຫ້ພໍດີ.
- ກຳນົດໄລຍະຫ່າງລະຫວ່າງສາຍຕາກັບໜ້າຈໍ.
- ປັບຂະໜາດໂຕອັກສອນໃນໜ້າຈໍດິຕີຈອນ ບໍ່ໃຫ້ມີຂະໜາດນ້ອຍຈົນເກີນໄປ.
- ພັກສາຍຕາທຸກໆ 20 ນາທີ.

ນອກຈາກການປົກປ້ອງດວງຕາຂອງເດັກນ້ອຍ ສິ່ງທີ່ສຳຄັນທີ່ສຸດ ພໍ່ແມ່ຄວນພາລູກຂອງຕົນໄປກວດສາຍຕາເປັນປະຈຳ ຢ່າງໜ້ອຍປີລະເທື່ອ ເພາະວ່າການເບິ່ງເຫັນແມ່ນສຳຄັນທີ່ສຸດ ທີ່ພວກເຮົາບໍ່ຄວນເບິ່ງຂ້າມ ເພາະວ່າພະຍາດຕາຫລາຍຊະນິດທີ່ບໍ່ສະແດງອາການ ຈົນກວ່າຈະເຂົ້າສູ່ໄລຍະທີ່ຮຸນແຮງ ເມື່ອເຖິງເວລານັ້ນ ມັນອາດຈະຊ້າເກີນໄປທີ່ຈະຮັກສາໃຫ້ເປັນປົກກະຕິ.

www.amarinbabyandkids.com

## ສາລາກະວີ

# ຈາກໃຈຄູ

\# ໂດຍ: ສ.ບົວຄຳໄຊ

◆ ເຫັນສິດດີເດັ່ນດ້ານ
ເຮືອງຮອງໄຟປັນຍາ
ການສຶກສາແຂງຂັ້ນ
ວຽກງານກໍເກັ່ງກ້າວ

ການຮ່ຳຮຽນຖະໜອມ
ສະຫລາດຄົມແຫລມກ້າ
ປະລິນຍາຕີ-ໂທ-ເອກ
ສູງຊັ້ນຊື່ສຽງ

◆ ໄວຮຽນຄູສ່ອງຊີ້
ຄອຍປະຄອງຄຽງແນະ
ມີຫຍັງເຄືອງຄາຂ້ອງ
ຄູຕອບຄຳຂອດແກ້

ເສີມສິ່ງຊຸມວິຊາ
ເນັ່ງແນບນຳພ້ອມ
ການຮຽນຂຽນອ່ານ
ໄຂແຈ້ງແຈ່ມໃຈ

◆ ຍາມເມື່ອເສັງສອບຊັ້ນ
ຄູອຸກໃນອຸລາ
ແຕ່ບໍ່ໂກດທາເຈົ້າ
ບໍ່ໂທດສິດວ່າໄຮ້

ຄັນຄັ່ງຄຸງຄາ
ຫງວ່ມເຫງົາຫງອຍເສົ້າ
ອຳອຽງບຽງບ່າຍ
ຄວາມຮູ້ສາດວິຊາ

◆ ບາງຄັ້ງຄູວ່າເວົ້າ
ມິໃຊ່ຄູຊິງຊັງ
ຄູຫາກເຫັນການກ້າວ
ຢ້ານສິດຫລົງລ່ຽມຮ້າຍ

ແຂງຂຶ່ມຂານໄຂ
ສິດເດີຊຸມເຈົ້າ
ທາງດີຕອງໄຕ່
ຊາມຊ້າຈຶ່ງເຕືອນ

◆ ຄູນີ້ ເໝືອນປຽບໄດ້
ຊວ້ານຊູຂະບວນເຖິງ
ຫລືປຽບແສງທຽນໄຕ້
ໃຫ້ຄົນເຫັນຮຸ່ງແຈ້ງ

ເຮືອໃຫຍ່ລຳຫລວງ
ຝັ່ງແຄມນະທີໄດ້
ເຜົາຕົນເຮືອງຮຸ່ງ
ມົວມ້ານມືດມາຍ

◆ ໃນໂອກາດວັນມິ່ງແກ້ວ
ຄູຫວນຄະນຶງຫາ
ຂໍໃຫ້ການຮຽນກ້າວ
ເປັນໜໍ່ແໜງຊາດເຊື້ອ

ວັນທີ່ 7 ຕຸລາ
ສິດຕົນສະເໜີດ້ານ
ປັນຍາຄົມສະຫລາດ
ເສີມສ້າງຊາດຈະເລີນ ຊອບແລ້ວ!





## ຫັກຫາຍ ລະບາຍ

\# ສາວຈົ້ມ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

໐ 12 ຕຸລາ ສາຍາວັບປະກາດເອກະລາດ ເຖິງແມ່ນເຫດການຈິງຈະຜ່ານພົ້ນໄປ ແຕ່ທອບໄຟແຫ່ງຄວາມສະຫວ່າງສະໄຫວຍັງຮຸ່ງວີໄລທົ່ວແດນສາທາ **12 ຕຸລາເອກອ້າງ** ຜົນງານໃຫຍ່ມີມາປອງປະຊາສຸກສີ ຊື່ນຊົມຍ່ຍ້ອງ **12 ຕຸລາລືກ້ອງ** ສະຫລອງວັນປະຫວັດສາດ ໂລກໂລກາຮັບຮູ້ ວ່າລາວສູ້ຊະນະມານ **ຊອບແລ້ວ!**

໐ **ອອກ**ພັນສາປະວໍລະບາຜ່ານພົ້ນ ຫລາຍຄົນກໍກະກຽມຈິດກຽມໃຈ ທັງ**ກຽມເງິນໄວ້ ໃສ່ຊອງຕາມລະດູການ** ທັງກຽມງານບາສີ ແຕ່ງແປງເອົາໄພ້ ກຽມໃຈເອົາເຂີຍພ້ອມ ຈັດງານດອງພິທີແຕ່ງ ສາມສີບັດອັ່ງລົ້ນ ອອມເງິນໄວ້ໃສ່ແຕ່ຊອງ **ພີ່ນ້ອງເອີຍ!**

໐ **ຜ່ານ**ພົ້ນໄປແລ້ວສຳລັບວັນຄູແຫ່ງຊາດ ທີ່ເຕັມໄປດ້ວຍບັນຍາກາດ **ເບີກບານມ່ວນຊື່ນ** ລາງຄົນຖືດອກໄມ້ ຊອງຊວັນກ່ອງສວຍງາມ ບ່ານມາອວຍພອນຄູ ເນື່ອງໃນວັນນັ້ນ **7 ຕຸລາບັນກ້ອງ** ບູຊາຄູຜູ້ສອນສັ່ງ ຕອບແທນຄຸນຄ່າລ້ຳ ຈົ່ງແຂງເຂັ້ມໜື່ນອັດສາ **ຄູເອີຍ!**

## ຊອບຍິ້ມ

\# ແອ່ນຕຸ້ງ

**ເລື່ອງ: ຄ່າລ້ຽງລູກ**

ທ້າວ ກ ປະກັບເມຍ ສານໄດ້ລົງຄວາມເຫັນໃຫ້ປະ ແຕ່ຕ້ອງໄດ້ຈ່າຍຄ່າລ້ຽງດູລູກເດືອນລະໜຶ່ງລ້ານກີບ ຈົນຮອດອາຍຸ 18 ປີ ແລະ ປີນີ້ກໍພໍດີອາຍຸລູກກໍໄດ້ 18 ປີພໍດີ. ທ້າວ ກ ກໍໂທຫາລູກມາເອົາເງິນ **ທ້າວ ກ:** ໃຫ້ລູກເອົາເງິນນີ້ໄປໃຫ້ແມ່ ແລ້ວບອກວ່າ ບາດນີ້ໝົດໜ້າທີ່ພໍ່ແລ້ວ ຕໍ່ໄປແລ້ວແຕ່ແມ່ເດີ; ເອີ ແລ້ວຢ່າລືມສັງເກດເບິ່ງສີໜ້າລາວແດ່ເດີ ວ່າຊິເປັນແບບໃດ

ລູກສາວກໍເອົາໄປໃຫ້ແມ່ ແລະ ກໍເລົ່າສິ່ງທີ່ພໍ່ບອກໃຫ້ແມ່ຟັງ

**ແມ່:** ເອີ ໄປບອກລາວແດ່ວ່າຂອບໃຈຫລາຍໆ ແລະ ກໍບອກລາວຕື່ມແດ່ວ່າ ລູກບໍ່ແມ່ນລູກລາວແທ້ ລູກເປັນລູກຂອງສ່ຽວລາວ ຢ່າລືມເບິ່ງສີໜ້າລາວແດ່ເດີວ່າຊິເຮັດໜ້າແບບໃດ?




## ຄະຕິເຕືອນໃຈ

\# ດອກຊະຍອມ

ຢ່າລືມຄວາມໜັ້ນ ພົງພັນພີ່ນ້ອງເກົ່າ
ຢ່າໄດ້ລະເຜົ່າເຊື້ອ ໄປຍ້ອງຜູ້ອື່ນດີ ທ່ານເອີຍ

# ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ພາກທີ VI**

**ສິດ, ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ**

**ມາດຕາ 35 (ປັບປຸງ) ສິດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ສະເໜີຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ຽວກັບການນຳໃຊ້ຊັບພະຍາກອນ ໂທລະຄົມມະນາຄົມ, ການເຊື່ອມຕໍ່ເຄືອຂ່າຍ, ການຢັ້ງຢືນຄຸນນະພາບ ແລະ ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;
2. ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ຕາມການອະນຸຍາດ;
3. ປະກອບ, ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ຕິດຕັ້ງອຸປະກອນໂທລະຄົມມະ ນາຄົມຕາມປະເພດ ການດຳເນີນທຸລະກິດໂທລະຄົມມະນາຄົມ;
4. ນຳໃຊ້, ສົ່ງຄືນ, ປ່ຽນແທນ, ໃຫ້ເຊົ່າ ຊັບພະຍາກອນໂທລະຄົມມະນາຄົມ ຕາມການເຫັນດີ ແລະ ອະນຸຍາດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
5. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ສະຖານທີ່, ທີ່ດິນ, ຖະໜົນ, ຮ່ອງລະບາຍນໍ້າ, ອາຄານ, ສິ່ງກໍ່ສ້າງ ແລະ ອື່ນໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ສະເໜີ ຂໍນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມ ນຳຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;
7. ສະເໜີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາປັບປຸງອັດຕາຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ;
8. ໂຈະ ຫຼື ຍົກເລີກ ການບໍລິການ ແກ່ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ທີ່ບໍ່ຊຳລະຄ່າບໍລິການ ຫຼື ນຳໃຊ້ການບໍລິການ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
9. ສະເໜີໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດ;
10. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ;
11. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 (ປັບປຸງ) ພັນທະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ສ້າງແຜນການດຳເນີນທຸລະກິດໂທລະຄົມມະນາຄົມຂອງຕົນ ໃຫ້ສອດຄ່ອງກັບແຜນພັດ ທະນາໂທລະຄົມມະນາຄົມແຫ່ງຊາດ;
2. ຖ່າຍທອດຄວາມຮູ້ທາງດ້ານເຕັກໂນໂລຊີທີ່ນຳເຂົ້າມາໃຫ້ບໍລິການຢູ່ ສປປລາວ ໃຫ້ພະ ນັກງານຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ພະນັກງານຂອງຕົນ;
3. ຮັບປະກັນລະບົບເຕັກນິກຂອງຕົນ ໃຫ້ສາມາດເຊື່ອມຕໍ່ເຂົ້າກັບລະບົບເຕັກນິກຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;
4. ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
5. ປະຕິບັດລະບຽບການດ້ານບັນຊີການເງິນ ແລະ ພັນທະການເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ໃຫ້ບໍລິການ ຢ່າງທົ່ວເຖິງ, ມີບໍລິການເປັນພາສາລາວ ແລະ ພາສາອື່ນ, ສາມາດນຳໃຊ້ໄດ້ຕະຫຼອດ ຊາວສີ່ຊົ່ວໂມງ, ມີຄຸນນະພາບ, ມີຄວາມສະດວກວ່ອງໄວ, ໂປ່ງໃສ ແລະ ຖືກຕ້ອງ;
7. ໃຫ້ບຸລິມະສິດໃນການສະໜອງການບໍລິການໂທລະຄົມມະນາຄົມແກ່ອົງການຈັດຕັ້ງຂອງລັດ;
8. ມີແຜນຟື້ນຟູ ເຄືອຂ່າຍໂທລະຄົມມະນາຄົມໃນກໍລະນີເກີດໄພພິບັດ, ວິກິດການ ຫຼື ພາວະ ສຸກເສີນ;
9. ເກັບກູ້ອຸປະກອນໂທລະຄົມມະນາຄົມທີ່ບໍ່ໄດ້ນຳໃຊ້ແລ້ວ ເພື່ອຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພຕໍ່ ຊີວິດ, ຊັບສິນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ;
10. ສົ່ງຄືນ ຫຼື ປ່ຽນແທນ ເລກໝາຍໂທລະຄົມມະນາຄົມ ຕາມການຕົກລົງຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ, ໃນກໍລະນີມີຜົນກະທົບຕໍ່ຜູ້ໃຊ້ບໍລິການ ຜູ້ໃຫ້ບໍລິການ ຕ້ອງປ່ຽນແທນ ຫຼື ທົດແທນ ໃຫ້ແກ່ຜູ້ໃຊ້ບໍລິການ ຕາມລະບຽບການ;
11. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່ໃຫ້ທັນກັບສະພາບການ;
12. ຮັບ ແລະ ແກ້ໄຂ ຄຳສະເໜີຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ;
13. ສະໜອງການເຊື່ອມຕໍ່ເຂົ້າກັບລະບົບເຕັກນິກ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ ສານ ພັດທະນາຂຶ້ນ ຕາມຄວາມຕ້ອງການຂອງວຽກງານໃນແຕ່ລະໄລຍະ;
14. ອຳນວຍຄວາມສະດວກໃຫ້ຜູ້ໃຫ້ບໍລິການອື່ນນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາ ຄົມຂອງຕົນ;
15. ສ້າງລະບົບເກັບກຳ ແລະ ປົກປ້ອງ ຂໍ້ມູນຂອງຜູ້ໃຊ້ບໍລິການບໍ່ໃຫ້ຮົ່ວໄຫຼ ຕາມການກຳ ນົດຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
16. ຂຶ້ນທະບຽນເລກໝາຍໂທລະສັບ ທີ່ເປີດນຳໃຊ້ບໍລິການ ໃນເຄືອຂ່າຍຂອງຕົນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
17. ແກ້ໄຂຜົນກະທົບ ແລະ ທົດແທນຄວາມເສຍຫາຍທີ່ເກີດຈາກການໃຫ້ບໍລິການຂອງຕົນ;
18. ລາຍງານການເຄື່ອນໄຫວ ແລະ ແຜນການເຄື່ອນໄຫວດຳເນີນທຸລະກິດຮອບດ້ານປະຈຳເດືອນ, ໄຕມາດ, ປະຈຳປີ ຕໍ່ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
19. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 (ປັບປຸງ) ສິດ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ.**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ໄດ້ຮັບການບໍລິການຢ່າງມີຄຸນນະພາບ, ມາດຕະຖານ, ໂປ່ງໃສ, ວ່ອງໄວ ແລະ ຍຸຕິທຳ;
2. ສະເໜີຂໍຂໍ້ມູນ ກ່ຽວກັບການບໍລິການ, ຄ່າບໍລິການ ແລະ ຄຸນນະພາບຂອງການບໍລິການ;
3. ໄດ້ຮັບການທົດແທນຄວາມເສຍຫາຍທີ່ເກີດຂຶ້ນຈາກການບໍລິການຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ສະເໜີຕໍ່ຜູ້ໃຫ້ການບໍລິການ ຫຼື ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອກວດກາ ແລະ ແກ້ໄຂ ໃນກໍລະນີພົບຂໍ້ສົງໄສ ຫຼື ບັນຫາ ທີ່ເກີດຈາກການນຳໃຊ້ບໍລິການໂທລະຄົມມະນາຄົມ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 (ປັບປຸງ) ພັນທະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັບຜິດຊອບຕໍ່ໜ້າກົດໝາຍ ຂອງເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ ທີ່ຂຶ້ນທະບຽນ ຢູ່ ສປປລາວ;
3. ປະຕິບັດຕາມເງື່ອນໄຂຂອງສັນຍາໃຊ້ບໍລິການກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ຊຳລະຄ່າບໍລິການໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ພາກທີ VII**

**ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ**

**ມາດຕາ 39 (ປັບປຸງ) ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ**

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນການຫັນເປັນເສດ ຖະກິດດິຈິຕອນ, ການຂະຫຍາຍ ແລະ ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ໄປເຖິງຊົນນະບົດເຂດຫ່າງໄກສອກຫຼີກ, ການພັດທະນາຊັບພະຍາກອນມະນຸດ, ລະບົບຖານດິຈິຕອນ (Digital platform), ຄວາມປອດໄພຂອງການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ.

**ມາດຕາ 40 (ປັບປຸງ) ແຫຼ່ງກອງທຶນ**

ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ການປະກອບສ່ວນຂອງງົບປະມານແຫ່ງລັດ;
2. ການນຳໃຊ້ລະບົບຖານດິຈິຕອນ (Digital platform), ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສ້າງ ແລະ/ຫຼື ຮ່ວມສ້າງຂຶ້ນ;
3. ການປະກອບສ່ວນ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ການຊ່ວຍເຫຼືອ ແລະ ປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 41 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ພາກທີ VIII**

**ຂໍ້ຫ້າມ**

**ມາດຕາ 42 (ປັບປຸງ) ຂໍ້ຫ້າມທົ່ວໄປຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:**

1. ດຳເນີນທຸລະກິດໂທລະຄົມມະນາຄົມປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

ອ່ານຕໍ່ສະບັບໜ້າ...



## ຊອກຮູ້ຍຸດທະສາດຫັນປ່ຽນໂດຍສັນຕິ

**ໂດຍ: ທິດດີ**

ນັບແຕ່ປີ 1945 ຈົນເຖິງທ້າຍຊຸມປີ 1970 ແມ່ນໄລຍະແຫ່ງການກຳເນີດຍຸດທະສາດຫັນປ່ຽນໂດຍສັນຕິ ຈາກນັ້ນມາ ກໍມີການປັບປຸງ ແລະ ຂະຫຍາຍຕົວ ຈົນບັນລຸຜົນສຳເລັດໂດຍການພັງທະລາຍຂອງ ສ.ໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກໃນຕົ້ນຊຸມປີ 90.

ປັດຈຸບັນນີ້, ໄດ້ມີຫລາຍທັດສະນະ ແລະ ວິທີນິຍາມທີ່ແຕກຕ່າງກັນ, ແຕ່ໃນດ້ານພື້ນຖານແລ້ວ ແມ່ນເປັນເອກະພາບໃນດ້ານຄວາມຮັບຮູ້, ທັດສະນະດ້ານທາດແທ້ຂອງຍຸດທະສາດ "ຫັນປ່ຽນໂດຍສັນຕິ".

ຍຸດທະສາດ "ຫັນປ່ຽນໂດຍສັນຕິ" ແມ່ນການຕໍ່ສູ້ "ທີ່ບໍ່ມີຄວັນປືນ" ຕ້ານກັບລັດທິສັງຄົມນິຍົມຢູ່ພາຍໃນກະໂຕຂອງບັນດາປະເທດສັງຄົມນິຍົມ, ເຮັດໃຫ້ລັດທິສັງຄົມນິຍົມພັງທະລາຍຈາກພາຍໃນດ້ວຍວິທີການໂຄສະນາລະບົບແນວຄິດຂອງທຶນນິຍົມ, ນຳໃຊ້ບັນດາປະເພດການຊ່ວຍເຫລືອ, ປິດລ້ອມ, ຂວໍ້າບາດດ້ານເສດຖະກິດ... ໂດຍແນໃສ່ໃຫ້ພາຍໃນປະເທດສັງຄົມນິຍົມໃຫ້ເກີດປັດໄຈ ແລະ ກຳລັງແຮງຕໍ່ສູ້ຕ້ານສັງຄົມນິຍົມ, ຕ້ານພັກກອມມູນິດ ແລະ ກຳມະກອນ, ກ້າວຂຶ້ນໂຄ່ນລົ້ມລະບອບສັງຄົມນິຍົມຈາກພາຍໃນ.

ອາດຈະຍົກນິຍາມແບບກວມລວມຄືດັ່ງນີ້: "ຫັນປ່ຽນໂດຍສັນຕິ" ແມ່ນ "ສົງຄາມທີ່ບໍ່ຕ້ອງການສ້າງສົງຄາມ" "ສົງຄາມທີ່ບໍ່ມີຄວັນປືນ"; ມັນແມ່ນຍຸດທະສາດບຸກໂຈມຕີຂອງລັດທິຈັກກະພັດ ແລະ ອິດທິກຳ ລັງປໍລະປັກປະຕິການເຂົ້າພາຍໃນຂອງບັນດາປະເທດສັງຄົມນິຍົມ ແລະ ບັນດາພັກກອມມູນິດ, ມັນແມ່ນການຕໍ່ສູ້ຊົນຊັ້ນຢູ່ໃນລະບົບສະຕິປັນ ຍາທີ່ຂ້ຽວຂາດໃນຂົງເຂດເສດຖະກິດ, ການເມືອງ, ແນວຄິດ, ວັດທະນະທຳ, ສັງຄົມ, ຄວາມໝັ້ນຄົງ, ການຕ່າງປະເທດ... ດ້ວຍການນຳໃຊ້ໝົດທຸກພາຫະນະ, ເລ່ລ່ຽມກົນອຸບາຍ, ສອດຫ້ອຍເຂົ້າໃນບັນດາປັດໄຈຕ້ານລັດທິສັງຄົມນິຍົມ ໂດຍແນໃສ່ສ້າງບາດກ້າວໃຫ້ມີການຜັນປ່ຽນ, ຕີໃຫ້ຖອຍ ແລະ ກ້າວໄປເຖິງການລົບລ້າງລັດທິສັງຄົມນິຍົມ.

ການດຳເນີນຍຸດທະສາດຫັນປ່ຽນໂດຍສັນຕິ ໃນທີ່ຜ່ານມາ ຕໍ່ບັນດາປະເທດຕ່າງໆ ສ່ວນຫລາຍແມ່ນຜ່ານສອງບາດກ້າວເຊັ່ນ:

ບາດກ້າວທີໜຶ່ງ: ສ້າງການຫັນປ່ຽນ ແລະ ຜັນແຍກຢູ່ພາຍໃນ; ສ້າງວິກິດການທາງດ້ານເສດຖະກິດ-ສັງຄົມກ້າວໄປເຖິງວິທີທາງການເມືອງປຸກລະດົມມະຫາຊົນຕໍ່ສູ້ທວງປະຊາທິປະໄຕ; ຫລາຍພັກ; ຫລາຍເຄົ້າ; ທວງໃຫ້ແກ້ໄຂຊີວິດການເປັນຢູ່ເກີນຄວາມສາມາດຕົວຈິງຂອງອຳນາດການປົກຄອງ ກ້າວໄປເຖິງສ້າງໃຫ້ມີທັ່ນແໜງການປົກຄອງຕາມທ່າອ່ຽງນິຍົມຂອງປະເທດມະຫາອຳນາດຕາເວັນຕົກ.

ບາດກ້າວທີສອງ: ໃນເມື່ອການຫັນປ່ຽນໂດຍສັນຕິບໍ່ໄດ້ຜົນ ຫລືບໍ່ບັນລຸລະດັບໃດໜຶ່ງແລ້ວ; ເມື່ອມີໂອກາດອຳນວຍຈະປຸກລຸກຂະບວນການລຸກຮື້ຂຶ້ນໂຄ່ນລົ້ມລະບອບການປົກຄອງຫລືດ້ວຍຮູບການລັດຖະປະຫານ.

ໃນຍຸກແຫລ່ງຂໍ້ມູນ-ຂ່າວສານຄືໃນປັດຈຸບັນ; ຍຸດທະສາດຫັນປ່ຽນໂດຍສັນຕິ ໄດ້ນຳໃຊ້ສື່ສັງຄົມອອນລາຍເປັນແຫລ່ງກະຈາຍຂໍ້ມູນໂຈມຕີເຂົ້າໃສ່ຈຸດອ່ອນ-ຂໍ້ຄົງຄ້າງ ເພື່ອຫວັງມ້າງເພຈາກຂ້າງໃນອອກມາຂ້າງນອກ.

ສະນັ້ນ, ການອະທິບາຍທຸກບັນຫາທີ່ສື່ສັງຄົມອອນລາຍຕັ້ງຂຶ້ນແມ່ນອາວຸດຕົ້ນຕໍ ເພື່ອທັບມ້າງກົນອຸບາຍດັ່ງກ່າວ.

ທຸກບັນຫາຍ່ອມມີທາງອອກ ເຮົາບໍ່ອະທິບາຍຜູ້ອື່ນກໍອະທິບາຍ ເຮົາບໍ່ກຳເອົາ ຜູ້ອື່ນກໍກຳເອົາ.

# ປະທານາທິບໍດີອິນໂດເນເຊຍ ຮຽກຮ້ອງໃຫ້ລັດຖະສະພາຕ່າງໆ ຊຸກຍູ້ໃຫ້ເສດຖະກິດທົ່ວໂລກຟື້ນຕົວຄືນ

ແປ ແລະ ຮຽບຮຽງ: ທະນາກອນ




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນກອງປະຊຸມປະທານລັດຖະສະພາກຸ່ມ 20 ປະເທດ ຫລື G20 ເມື່ອວັນທີ 6 ຕຸລາຜ່ານມາ, ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ໄດ້ຮຽກຮ້ອງໃຫ້ລັດຖະສະພາຂອງບັນດາປະເທດ ຈົ່ງເພີ່ມທະວີການຮ່ວມມືກັນ ເພື່ອຜ່ານຜ່າວິກິດການທົ່ວໂລກ, ຊຸກຍູ້ໃຫ້ເສດຖະກິດທົ່ວໂລກຟື້ນຕົວຄືນ.

ທ່ານ ໂຈໂກ ວິໂດໂດ ໄດ້ກ່າວວ່າ: ລັດຖະສະພາບັນດາປະເທດຕ້ອງກາຍເປັນພາກສ່ວນໜຶ່ງຂອງແຜນການແກ້ໄຂວິກິດການທົ່ວໂລກ ເພື່ອບັນລຸໃຫ້ສ້າງຕັ້ງການສົນທະນາກັນ, ຊຸກຍູ້ຄວາມສາມັກຄີ ແລະ ຫລີກລ່ຽງຄວາມແຕກແຍກກັນ. ລັດທິຫລາຍຝ່າຍເປັນວິທີທີ່ມີປະສິດທິຜົນຫລາຍທີ່ສຸດໃນການຜ່ານຜ່າສິ່ງທ້າທາຍຮ່ວມ, ບໍ່ມີປະເທດໃດ ຫລື ເທົ່າໃດປະເທດ ສາມາດແກ້ໄຂບັນຫາໃດໆພຽງແຕ່ຝ່າຍດຽວ.

ກອງປະຊຸມປະທານລັດຖະສະພາ G20 ມີຈຸດປະສົງຊຸກຍູ້ການຮ່ວມມືກັນລະຫວ່າງລັດຖະສະພາຂອງບັນດາປະເທດ ເພື່ອສະໜັບສະໜູນວາລະປະຊຸມຂອງກອງປະຊຸມສຸດຍອດ G20 ແລະ ຈັດຕັ້ງປະຕິບັດສັນຍາທີ່ກ້າວເຖິງຂັ້ນຕົກລົງກັນ.

ແຫລ່ງຂ່າວ: CRI

# ອັບຟະການິດສະຖານ ແລະ ເວເນຊູເອລາ ຮ່ວມສະໝັກຊິງບ່ອນນັ່ງໃນສະພາສິດທິມະນຸດ ສປຊ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ຕາມການລາຍງານຂ່າວໃຫ້ຮູ້ວ່າ: ສະມັດຊາໃຫຍ່ອົງການສະຫະປະຊາຊາດ (ສປຊ) ໄດ້ລົງຄະແນນສຽງໃນວັນອັງຄານທີ 11 ຕຸລາ 2022 ເພື່ອເພີ່ມຊື່ຂອງ 14 ປະເທດ ເຂົ້າໃນສະພາສິດທິມະນຸດ ເຊິ່ງລວມຢູ່ໃນບັນດາປະເທດເຫລົ່ານັ້ນ ລວມປະເທດອັບຟະການິດສະຖານ ແລະ ເວເນຊູເອລາ.

ໃນບັນດາປະເທດທີ່ລົງສະໝັກຄັ້ງນີ້ ລວມມີ 17 ປະເທດ ຈາກ 5 ເຂດ ໃນນັ້ນ, ມີອາຊີ-ປາຊີຟິກ, ລາຕິນ-ອາເມຣິການ ແລະ ທະເລຄາຣິບບຽນ ເຊິ່ງບັນດາຜູ້ສະໝັກມີຄວາມຕ້ອງການສຽງສ່ວນຫລາຍຈາກການລົງຄະແນນສຽງດ້ວຍຄະແນນປິດລັບ ເພື່ອຈະໄດ້ເຂົ້າໄປນັ່ງຢູ່ໃນສະພາດັ່ງກ່າວ ທີ່ມີສຳນັກງານຕັ້ງຢູ່ທີ່ນະຄອນເຈນີວາ.

ສຳລັບປະເທດເວເນຊູເອລາ ແມ່ນຈະແຂ່ງຂັນກັບຊິເລ ແລະ ໂກສະຕາຣິກາ ເພື່ອຊິງເອົາ 2 ບ່ອນນັ່ງ ສຳລັບສະພາສິດທິມະນຸດ.

ທ່ານ ຫລຸຍ ຊາກບອນໂນ ຜູ້ອຳນວຍການຂອງກຸ່ມປົກປ້ອງສິດທິມະນຸດ HRW ກ່າວຢູ່ໃນຖະແຫລງການວ່າ "ການກ່າວໂຈມຕີແກ້ແຄ້ນຂອງເວເນຊູເອລາ ເຮັດໃຫ້ປະເທດດັ່ງກ່າວບໍ່ເໝາະສົມທີ່ຈະເຂົ້າເປັນສະມາຊິກຢູ່ໃນສະພາສິດທິມະນຸດຂອງສະຫະປະຊາຊາດ. ການກັບຄືນເຂົ້າໄປນັ່ງຢູ່ໃນສະພາດັ່ງກ່າວ ຈະທຳລາຍຕໍ່ຄວາມໜ້າເຊື່ອຖືຂອງອົງການສະຫະປະຊາຊາດ."

ແຫລ່ງຂ່າວ: VOA


















| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |